ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ປະທານປະເທດ

ເລກທີ 031/ປປທ

ນະຄອນຫຼວງວຽງຈັນ, ວັນທີ 30.01.2015

# ລັດຖະດຳລັດ

# ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

**ກ່ຽວກັບການປະກາດໃຊ້ກົດໝາຍວ່າດ້ວຍ**

**ການຕ້ານ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ**

---

- ອີງຕາມ ລັດຖະທຳມະນູນແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໝວດທີ VI ມາດຕາ 67 ຂໍ້1;
- ອີງຕາມ ມະຕິຕົກລົງຂອງສະພາແຫ່ງຊາດ ສະບັບເລກທີ 015/ສພຊ, ລົງວັນທີ 23 ທັນວາ 2014;
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 04/ຄປຈ, ລົງວັນທີ 22 ມັງກອນ 2015.

**ປະທານປະເທດ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ :**

ມາດຕາ 1. ປະກາດໃຊ້ກົດໝາຍວ່າດ້ວຍ ການຕ້ານ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ.

ມາດຕາ 2. ລັດຖະດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ປະທານປະເທດ ແຫ່ງ ສປປ ລາວ

ຈູມມາລີ ໄຊຍະສອນ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ສະພາແຫ່ງຊາດ

ເລກທີ 015 /ສພຊ

# ມະຕິຕົກລົງ

## ຂອງ

## ສະພາແຫ່ງຊາດ ແຫ່ງ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

## ກ່ຽວກັບການຕົກລົງຮັບຮອງເອົາ ກົດໝາຍວ່າດ້ວຍ ການຕ້ານ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ

---

ອີງຕາມມາດຕາ 53 ຂໍ້ 2 ຂອງລັດຖະທຳມະນູນ ແລະມາດຕາ 3 ຂໍ້ 1 ຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ກ່ຽວກັບສິດ ແລະ ໜ້າທີ່ຂອງສະພາແຫ່ງຊາດ.

ພາຍຫຼັງທີ່ກອງປະຊຸມສະໄໝສາມັນ ເທື່ອທີ 8 ຂອງສະພາແຫ່ງຊາດ ຊຸດທີ VII ໄດ້ຄົ້ນຄວ້າພິຈາລະນາຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍ ການຕ້ານ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ໃນວາລະກອງປະຊຸມຕອນບ່າຍ ຂອງວັນທີ 23 ທັນວາ 2014

**ກອງປະຊຸມໄດ້ຕົກລົງ:**

**ມາດຕາ 1** ຮັບຮອງເອົາກົດໝາຍວ່າດ້ວຍ ການຕ້ານ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ດ້ວຍຄະແນນສຽງເຫັນດີ ເປັນສ່ວນຫຼາຍ.

**ມາດຕາ 2** ມະຕິຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ນະຄອນຫຼວງວຽງຈັນ, ວັນທີ 23 ທັນວາ 2014

ປະທານສະພາແຫ່ງຊາດ

ປານີ ຢາທໍ່ຕູ້

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ ເລກທີ 56 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 23 ທັນວາ 2014

# ກົດໝາຍວ່າດ້ວຍ
# ການຕ້ານ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ

## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ກົດໝາຍສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຕ້ານ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ດ້ວຍການປ້ອງກັນ, ປົກປ້ອງ, ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍ ແລະ ແກ້ໄຂການໃຊ້ຄວາມຮຸນແຮງດັ່ງກ່າວ ເພື່ອປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງແມ່ຍິງ ແລະ ເດັກ ແນໃສ່ ຈຳກັດທຸກຮູບແບບການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ, ຍົກສູງຖານະບົດບາດ, ກຽດສັກສີຂອງແມ່ຍິງ ແລະ ເດັກ, ບັນລຸຄວາມສະເໝີພາບຍິງ-ຊາຍ ປະກອບສ່ວນ ສ້າງສັງຄົມໃຫ້ມີຄວາມສະຫງົບ, ສາມັກຄີ, ປອງດອງ, ຍຸຕິທຳ ແລະ ສີວິໄລ, ປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ.

**ມາດຕາ 2 ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ**

ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ແມ່ນ ພຶດຕິກຳ ທີ່ເຮັດໃຫ້ເກີດ ຫຼື ຈະເຮັດໃຫ້ເກີດອັນຕະລາຍ, ຄວາມເສັຍຫາຍຕໍ່ແມ່ຍິງ ແລະ ເດັກ ທາງດ້ານຮ່າງກາຍ, ຈິດໃຈ, ທາງເພດ, ຊັບສິນ ຫຼື ເສດຖະກິດ.

**ມາດຕາ 3 ການຕ້ານ ແລະ ສະກັດກັ້ນ ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ**

ການຕ້ານ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ແມ່ນ ການປ້ອງກັນ, ການປົກປ້ອງ, ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍ ແລະ ການແກ້ໄຂການໃຊ້ຄວາມຮຸນແຮງ ລວມທັງການນຳໃຊ້ມາດຕະການຕໍ່ຜູ້ໃຊ້ຄວາມຮຸນແຮງ.

**ມາດຕາ 4 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ສະມາຊິກໃນຄອບຄົວ** ໝາຍເຖິງ ຜົວ, ເມັຍ, ພໍ່, ແມ່, ລູກ, ອ້າຍ, ເອື້ອຍ, ນ້ອງ ແລະ ຜູ້ອື່ນທີ່ອາໄສຢູ່ນຳ ໂດຍໄດ້ຂຶ້ນສຳມະໂນຄົວ ລວມທັງຜູ້ໄດ້ຮັບອະນຸຍາດພັກເຊົາຢ່າງ ຖືກຕ້ອງ;

2. **ເດັກ** ໝາຍເຖິງ ບຸກຄົນທີ່ມີອາຍຸຕ່ຳກວ່າ ສິບແປດປີ;

3. **ຜູ້ໃຊ້ຄວາມຮຸນແຮງ** ໝາຍເຖິງ ຜູ້ກະທຳ, ຜູ້ເມີນເສີຍ ຫຼື ລະເລີຍ ຊຶ່ງກໍ່ໃຫ້ເກີດຄວາມເສັຍຫາຍຕໍ່ແມ່ຍິງ ຫຼື ເດັກທາງດ້ານຮ່າງກາຍ, ຈິດໃຈ, ທາງເພດ, ຊັບສິນ ຫຼື ເສດຖະກິດ;

4. **ຜູ້ຖືກເຄາະຮ້າຍ** ໝາຍເຖິງ ແມ່ຍິງ ຫຼື ເດັກທີ່ໄດ້ຮັບຄວາມເສັຍຫາຍ ທາງດ້ານຮ່າງກາຍ, ຈິດໃຈ, ທາງເພດ, ຊັບສິນ ຫຼື ເສດຖະກິດ ຈາກການກະທຳ, ການເມີນເສີຍ ຫຼື ລະເລີຍຂອງຜູ້ໃຊ້ຄວາມຮຸນແຮງ;

5. **ການທາລຸນ** ໝາຍເຖິງ ພຶດຕິກຳ ທີ່ເປັນການທຳຮ້າຍຮ່າງກາຍ ຫຼື ຈິດໃຈຂອງແມ່ຍິງ ແລະ ເດັກ ເປັນຕົ້ນ ການເຕະ, ຕີ, ຜູກມັດ, ຂັງ, ໃຫ້ອົດອາຫານ, ບັງຄັບໃຫ້ອອກແຮງງານເກີນຂອບເຂດ, ນອກໃຈ, ລ່ວງລະເມີດທາງເພດຕໍ່ແມ່ຍິງ ແລະ ເດັກ;

6. **ພຶດຕິກຳ** ໝາຍເຖິງ ການກະທຳ, ການເມີນເສີຍ ຫຼື ລະເລີຍ;

7. **ການກະທຳ** ໝາຍເຖິງ ການເຮັດ ແລະ ການເວົ້າ ຕົວຈິງ;

8. **ການເມີນເສີຍ ຫຼື ລະເລີຍ** ໝາຍເຖິງ ການບໍ່ເຮັດໃນສິ່ງທີ່ກົດໝາຍບອກໃຫ້ເຮັດ ຫຼື ໃນສິ່ງທີ່ສະມາຊິກໃນຄອບຄົວ ຄວນປະຕິບັດຕໍ່ກັນ ຊຶ່ງສ້າງຄວາມເສັຍຫາຍຕໍ່ຮ່າງກາຍ, ຈິດໃຈ ຫຼື ສຸຂະພາບຂອງແມ່ຍິງ ແລະ ເດັກ ເປັນຕົ້ນ ການບໍ່ປະຕິບັດພັນທະຂອງຕົນ ໃນການເບິ່ງແຍງລ້ຽງດູລູກ ຫຼື ເດັກທີ່ຢູ່ໃນການຄຸ້ມຄອງຂອງຕົນ, ການບໍ່ເບິ່ງແຍງດູແລ ສະມາຊິກໃນຄອບຄົວໃນເວລາເຈັບເປັນ ຫຼື ເສັຍອົງຄະ;

9. **ການບັງຄັບຮ່ວມເພດ** ໝາຍເຖິງ ການກະທຳຂອງຜົວ ເພື່ອຮ່ວມເພດກັບເມັຍຕົນ ດ້ວຍການໃຊ້ກຳລັງ, ບັງຄັບ, ຂົ່ມຂູ່ ຊຶ່ງຝືນໃຈຂອງຜູ້ເປັນເມັຍ ຫຼື ໃນເວລາທີ່ເມັຍ ຢູ່ໃນສະພາບບໍ່ພ້ອມທີ່ຈະມີເພດສຳພັນ;

10. **ການຂົ່ມຂືນທຳຊຳເລົາ** ໝາຍເຖິງ ການໃຊ້ກຳລັງ, ໃຊ້ອາວຸດນາບຂູ່, ໃຊ້ຢາສະຫຼົບ, ໃຊ້ສິ່ງມຶນເມົາ ຫຼື ໃຊ້ວິທີອື່ນ ທີ່ເຮັດໃຫ້ຜູ້ຍິງ ຫຼື ເດັກ ຕົກຢູ່ໃນສະພາບບໍ່ສາມາດຊ່ວຍເຫຼືອຕົນເອງໄດ້ ເພື່ອທຳຊຳເລົາດ້ວຍການຂືນໃຈຂອງ ຜູ້ຍິງ ຫຼື ເດັກ;

11. **ການຮ່ວມເພດກັບເດັກ** ໝາຍເຖິງ ທຸກການກະທຳທາງເພດຮ່ວມກັບເດັກຍິງ ຫຼື ເດັກຊາຍ ດ້ວຍການຕົວະຍົວະ, ຫຼອກລວງ, ຊວນເຊື່ອ, ຊື້ຈ້າງ, ຈອບອອຍ ຫຼື ຮູບການອື່ນ ເພື່ອໃຫ້ເດັກສົມຍອມ ແລະ ປະຕິບັດຕາມ;

12. **ນັກສັງຄົມສົງເຄາະ** ໝາຍເຖິງ ບຸກຄົນທີ່ໄດ້ຮັບການອະນຸຍາດ ຫຼື ແຕ່ງຕັ້ງຈາກອົງການຈັດຕັ້ງທີ່ກ່ຽວຂ້ອງຂອງລັດ ເພື່ອໃຫ້ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍ;

13. **ພະນັກງານສັງຄົມສົງເຄາະ** ໝາຍເຖິງ ພະນັກງານ ຫຼື ເຈົ້າໜ້າທີ່ ທີ່ສັງກັດຢູ່ສະຫະພັນແມ່ຍິງ ແລະ ຂະແໜງການແຮງງານ ແລະ ສະຫວັດດີການສັງຄົມ ຊຶ່ງເຮັດວຽກກ່ຽວກັບວຽກງານສັງຄົມສົງເຄາະ;

14. **ການຈຳແນກຕໍ່ແມ່ຍິງ** ໝາຍເຖິງ ການແບ່ງແຍກ, ການກີດກັ້ນ, ກີດໜ່ວງ ຫຼື ຈຳກັດ ບົນພື້ນຖານເຊື້ອຊາດ, ຜິວພັນ, ເພດ, ເຜົ່າ, ສາສະໜາ, ພາສາ, ການສຶກສາ, ຄວາມຮູ້ຄວາມສາມາດ, ສະຕິປັນຍາ, ຖານະທາງດ້ານເສດຖະກິດ-ສັງຄົມ, ສຸຂະພາບ, ຮູບຮ່າງ, ຄວາມພິການ ແລະ ດ້ານອື່ນຂອງແມ່ຍິງ ຊຶ່ງເຮັດໃຫ້ຜູ່ກ່ຽວບໍ່ໄດ້ຮັບສິດອັນຊອບທຳຂອງຕົນ;

15. **ການຈຳແນກຕໍ່ເດັກ** ໝາຍເຖິງ ການແບ່ງແຍກ, ການກີດກັ້ນ, ກີດໜ່ວງ ຫຼື ຈຳກັດ ບົນພື້ນຖານເຊື້ອຊາດ, ຜິວພັນ, ເພດ, ເຜົ່າ, ສາສະໜາ, ພາສາ, ການສຶກສາ, ຄວາມຮູ້ ຄວາມສາມາດ, ສະຕິປັນຍາ, ຖານະທາງດ້ານເສດຖະກິດ-ສັງຄົມ, ສຸຂະພາບ, ຮູບຮ່າງ, ຄວາມພິການ, ຕົ້ນກຳເນີດ ແລະ ດ້ານອື່ນຂອງເດັກ, ພໍ່ແມ່, ຜູ່ປົກຄອງ ຫຼື ສະມາຊິກອື່ນໃນຄອບຄົວຂອງເດັກ ຊຶ່ງເຮັດໃຫ້ເດັກບໍ່ໄດ້ຮັບສິດອັນຊອບທຳຂອງຕົນ;

16. **ການໃຊ້ແຮງງານເດັກ** ໝາຍເຖິງ ການຮັບເອົາເດັກຕ່ຳກວ່າເກນອາຍຸເຂົ້າເຮັດວຽກ, ໃຫ້ເດັກເຮັດວຽກທີ່ເປັນອັນຕະລາຍ ຫຼື ຢູ່ສະຖານທີ່ທີ່ເປັນອັນຕະລາຍ, ໃຫ້ເດັກເຮັດວຽກເກີນໂມງ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍແຮງງານ ແລະ ລະບຽບການ ທີ່ກ່ຽວຂ້ອງ;

17. **ການປ້ອງກັນ** ໝາຍເຖິງ ການກັນບໍ່ໃຫ້ເກີດການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ດ້ວຍການນຳໃຊ້ວິທີການ, ຮູບການ ແລະ ມາດຕະການຕ່າງໆ;

18. **ການປົກປ້ອງ** ໝາຍເຖິງ ການນຳໃຊ້ວິທີການ, ມາດຕະການ ເພື່ອໃຫ້ຢຸດເຊົາການໃຊ້ຄວາມຮຸນແຮງ, ໃຫ້ການຊ່ວຍເຫຼືອຜູ່ຖືກເຄາະຮ້າຍ ແລະ ແກ້ໄຂ ຕາມຄວາມເປັນຈິງ, ກົດໝາຍ ແລະ ລະບຽບການ;

19. **ລະຫຸໂທດ** ໝາຍເຖິງ ການກະທຳຜິດທີ່ກົດໝາຍ ໄດ້ກຳນົດໂທດຕຳນິວິຈານຕໍ່ໜ້າມະຫາຊົນ ຫຼື ໂທດປັບໃໝ.

**ມາດຕາ 5 ນະໂຍບາຍຂອງລັດກ່ຽວກັບວຽກງານຕ້ານ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ**

ລັດ ສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ, ສິດສະເໝີພາບຍິງ-ຊາຍ, ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງແມ່ຍິງ, ຮັບປະກັນສິດທິພື້ນຖານຂອງເດັກ ດ້ວຍການສ້າງທຸກເງື່ອນໄຂໃຫ້ແມ່ຍິງ ແລະ ເດັກ ໄດ້ຮັບການພັດທະນາຢ່າງຮອບດ້ານ, ມີບົດບາດໃນຄອບຄົວ, ສັງຄົມ ແລະ ໃນເວທີການເມືອງ ເພື່ອເປັນກຳລັງແຮງສັງລວມໃນການປົກປັກຮັກສາ ແລະ ພັດທະນາປະເທດຊາດ.

ລັດ ຖືວ່າການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ເປັນການກະທຳຜິດ, ຕ້ານທຸກຮູບແບບການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ແລະ ບໍ່ໃຫ້ອ້າງເຖິງ ຮີດຄອງປະເພນີ ຫຼື ຄວາມເຊື່ອຖື ເປັນເຫດຜົນໃນການໃຊ້ຄວາມຮຸນແຮງ.

ລັດ ປະກອບບຸກຄະລາກອນ, ພາຫານະ, ວັດຖູປະກອນ, ສະໜອງງົບປະມານ ເຂົ້າໃສ່ວຽກງານຕ້ານ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ.

ລັດ ເອົາໃຈໃສ່ໂຄສະນາ, ສຶກສາອົບຮົມ, ຊຸກຍູ້, ສົ່ງເສີມການຈັດຕັ້ງ ພາກລັດ, ເອກະຊົນ ທັງພາຍໃນ ແລະ ຕ່າງປະເທດ ຕະຫຼອດຮອດປະຊາຊົນບັນດາເຜົ່າໃຫ້ເຂົ້າຮ່ວມໃນວຽກງານຕ້ານ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ແລະ ສົ່ງເສີມວັດທະນະທຳອັນດີງາມຂອງຊາດ.

**ມາດຕາ 6 ຫຼັກການກ່ຽວກັບວຽກງານຕ້ານ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ**

ການຕ້ານ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ໃຫ້ປະຕິບັດຕາມຫຼັກການພື້ນຖານ ດັ່ງນີ້:

1. ເອົາການປ້ອງກັນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ເປັນຕົ້ນຕໍ, ເອົາການປົກປ້ອງ, ການຊ່ວຍເຫຼືອ ແລະ ການແກ້ໄຂການໃຊ້ຄວາມຮຸນແຮງ ລວມທັງການນຳໃຊ້ມາດຕະການເປັນສຳຄັນ;

2. ປະສານສົມທົບໃນການປ້ອງກັນ, ການປົກປ້ອງ, ການຊ່ວຍເຫຼືອ, ການແກ້ໄຂ ແລະ ການນຳໃຊ້ມາດຕະການ ໂດຍຖືເອົາຜົນປະໂຫຍດສູງສຸດຂອງແມ່ຍິງ ແລະ ເດັກ;

3. ຖືສຳຄັນ, ຄົ້ນຄວ້າ ແລະ ພິຈາລະນາ ຄວາມຄິດເຫັນຂອງແມ່ຍິງ ແລະ ເດັກຕໍ່ທຸກບັນຫາກ່ຽວກັບການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ;

4. ປົກປ້ອງ, ຊ່ວຍເຫຼືອແມ່ຍິງ ແລະ ເດັກ ທີ່ຖືກເຄາະຮ້າຍຢ່າງທັນການ, ສອດຄ່ອງກັບກົດໝາຍ, ຄວາມເປັນຈິງ ແລະ ຄວາມສາມາດຕົວຈິງຂອງບຸກຄົນ ແລະ ການຈັດຕັ້ງທີ່ກ່ຽວຂ້ອງ;

5. ຮັບປະກັນການຮັກສາຄວາມລັບຂອງແມ່ຍິງ ແລະ ເດັກທີ່ຖືກເຄາະຮ້າຍ;

6. ເສີມຂະຫຍາຍບົດບາດ ແລະ ຄວາມຮັບຜິດຊອບຂອງບຸກຄົນ, ຄອບຄົວ, ຊຸມຊົນ ແລະ ການຈັດຕັ້ງທຸກພາກສ່ວນເຂົ້າໃນວຽກງານຕ້ານ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ.

**ມາດຕາ 7 ຂອບເຂດການນຳໃຊ້ກົດໝາຍ**

ກົດໝາຍສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ພາກລັດ ແລະ ເອກະຊົນ ທັງພາຍໃນ ແລະ ຕ່າງປະເທດທີ່ອາໄສຢູ່ໃນດິນແດນຂອງ ສປປ ລາວ.

**ມາດຕາ 8 ການຮ່ວມມືສາກົນ**

ລັດ ສົ່ງເສີມການພົວພັນ ແລະ ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານຕ້ານ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ດ້ວຍການແລກປ່ຽນບົດຮຽນ, ຂໍ້ມູນ ຂ່າວສານ, ການຄົ້ນຄວ້າວິທະຍາສາດ ແລະ ການຮ່ວມມືອື່ນ ລວມທັງປະຕິບັດສັນຍາສາກົນ ແລະ ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ.

# ພາກທີ II
# ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ
## ໝວດທີ 1
## ຮູບການໃຊ້ຄວາມຮຸນແຮງ

**ມາດຕາ 9 ຮູບການໃຊ້ຄວາມຮຸນແຮງ**

ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະເດັກ ມີ ສອງ ຮູບການ ດັ່ງນີ້:

1. ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ໂດຍສະມາຊິກໃນຄອບຄົວ;
2. ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ໂດຍບຸກຄົນອື່ນ.

**ມາດຕາ 10 ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ໂດຍສະມາຊິກໃນຄອບຄົວ**

ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ໂດຍສະມາຊິກໃນຄອບຄົວ ແມ່ນ ການກະທຳ, ການເມີນເສີຍ ຫຼື ລະເລີຍ ຂອງສະມາຊິກຜູ້ໃດໜຶ່ງໃນຄອບຄົວ ທີ່ກໍ່ໃຫ້ເກີດຄວາມອັນຕະລາຍ, ຄວາມເສັຍຫາຍ ຕໍ່ແມ່ຍິງ ແລະ ເດັກທີ່ເປັນສະມາຊິກໃນຄອບຄົວ ທາງດ້ານຮ່າງກາຍ, ຈິດໃຈ, ທາງເພດ, ຊັບສິນ ຫຼື ເສດຖະກິດ ໂດຍບໍ່ຂຶ້ນກັບວ່າການໃຊ້ຄວາມຮຸນແຮງດັ່ງກ່າວ ຈະເກີດຂຶ້ນຢູ່ສະຖານທີ່ໃດກໍຕາມ.

**ມາດຕາ 11 ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ໂດຍບຸກຄົນອື່ນ**

ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ໂດຍບຸກຄົນອື່ນ ແມ່ນ ການກະທຳ, ການເມີນເສີຍ ຫຼື ລະເລີຍ ຂອງບຸກຄົນ, ກຸ່ມຄົນອື່ນ ທີ່ບໍ່ແມ່ນສະມາຊິກໃນຄອບຄົວ ຂອງຕົນຕໍ່ແມ່ຍິງ ແລະ ເດັກ ລວມທັງການກະທຳຂອງເຈົ້າໜ້າທີ່, ພະນັກງານ ຊຶ່ງກໍ່ໃຫ້ ເກີດຄວາມອັນຕະລາຍ, ຄວາມເສັຍຫາຍ ຕໍ່ແມ່ຍິງ ແລະ ເດັກ ທາງດ້ານຮ່າງກາຍ, ຈິດໃຈ, ທາງເພດ, ຊັບສິນ ຫຼື ເສດຖະກິດ ຢູ່ສະຖານທີ່ຊຸມຊົນ, ສະຖານທີ່ສາທາລະນະ, ສະຖານທີ່ເຮັດວຽກ, ສະຖານການສຶກສາ, ສະຖານທີ່ລ້ຽງເດັກ ແລະ ສະຖານທີ່ອື່ນ.

## ໝວດທີ 2
## ປະເພດການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ

**ມາດຕາ 12 ປະເພດການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ**

ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ມີ ສີ່ ປະເພດ ດັ່ງນີ້:

1. ຄວາມຮຸນແຮງຕໍ່ຮ່າງກາຍ;
2. ຄວາມຮຸນແຮງຕໍ່ຈິດໃຈ;
3. ຄວາມຮຸນແຮງທາງເພດ;

4. ຄວາມຮຸນແຮງຕໍ່ຊັບສິນ ຫຼື ເສດຖະກິດ.

**ມາດຕາ 13 ຄວາມຮຸນແຮງຕໍ່ຮ່າງກາຍ**

ຄວາມຮຸນແຮງຕໍ່ຮ່າງກາຍ ແມ່ນ ການກະທຳໂດຍເຈດຕະນາ ເປັນຕົ້ນ ການທາລຸນ, ການທໍລະມານ, ການຕີບຕີ, ການເຕະ, ການຊຸກ, ການຍູ້, ການໂຍນເດັກຖິ້ມ ຊຶ່ງພາໃຫ້ ບາດເຈັບ, ມີຮອຍຊ້ຳ ຫຼື ບາງກໍລະນີອາດຈະບໍ່ເຫັນຮ່ອງຮອຍຂອງການໃຊ້ຄວາມຮຸນແຮງ, ເປັນບ້າເສຍຈິດ, ເສຍອົງຄະ ຫຼື ເສຍຊີວິດ.

**ມາດຕາ 14 ຄວາມຮຸນແຮງຕໍ່ຈິດໃຈ**

ຄວາມຮຸນແຮງຕໍ່ຈິດໃຈ ແມ່ນ ການກະທຳ, ການເມີນເສີຍ ຫຼື ລະເລີຍ ທີ່ກໍ່ໃຫ້ເກີດຜົນກະທົບຕໍ່ຈິດໃຈຂອງແມ່ຍິງ ແລະ ເດັກ ເປັນຕົ້ນ ການມີເມັຍຫຼາຍຄົນ, ການໝິ່ນປະໝາດ, ການນິນທາ, ການໃສ່ຮ້າຍ, ການປ້ອຍດ່າ, ການປະຈານ, ການບໍ່ໃຫ້ຄວາມສຳຄັນ, ການທຳມິດສະຈານ, ການປ່ອຍປະ, ການລຳອຽງ, ການຈຳແນກ, ການແຍກຈາກໝູ່ເພື່ອນ ຫຼື ຄອບຄົວ, ການບໍ່ໃຫ້ກຽດ, ບໍ່ນັບຖື, ການເຍາະເຍີ້ຍສຽດສີ, ການກີດກັ້ນ, ການບັງຄັບ ຫຼື ການຂົ່ມຂູ່ ຊຶ່ງເຮັດໃຫ້ ເສື່ອມເສຍຊື່ສຽງ, ກຽດສັກສີ, ອັບອາຍ, ຂາດຄວາມເຊື່ອໝັ້ນ, ເສຍສຸຂະພາບຈິດ, ຊຶມເສົ້າ ຫຼື ຂ້າຕົວຕາຍ.

**ມາດຕາ 15 ຄວາມຮຸນແຮງທາງເພດ**

ຄວາມຮຸນແຮງທາງເພດ ແມ່ນ ການກະທຳ ຫຼື ຄວາມພະຍາຍາມກະທຳ ທີ່ກໍ່ຄວາມເສຍຫາຍຕໍ່ສິດທິທາງເພດຂອງແມ່ຍິງ ແລະ ເດັກ ເປັນຕົ້ນ ການຂົ່ມຂືນກະທຳຊຳເລົາ, ການບັງຄັບຮ່ວມເພດ, ການທຳລາມົກ, ການທຳອະນາຈານ, ການກະທຳທີ່ຫຍາບຊ້າທາງເພດ, ການເວົ້າຈາ ຫຼື ການສຳຜັດໃນລັກສະນະທາງເພດ ຊຶ່ງບໍ່ເປັນທີ່ຕ້ອງການຂອງຜູ້ຮັບຟັງ ຫຼື ຜູ້ຖືກສຳຜັດ ຫຼື ການສົ່ງຜູ້ຍິງ ຫຼື ເດັກໃຫ້ບຸກຄົນອື່ນ ເພື່ອເປົ້າໝາຍທາງເພດ.

**ມາດຕາ 16 ຄວາມຮຸນແຮງຕໍ່ຊັບສິນ ຫຼື ເສດຖະກິດ**

ຄວາມຮຸນແຮງຕໍ່ຊັບສິນ ຫຼື ເສດຖະກິດ ແມ່ນ ການກະທຳ, ການເມີນເສີຍ ຫຼື ລະເລີຍທີ່ກໍ່ຄວາມເສຍຫາຍຕໍ່ຊັບສິນຂອງຄອບຄົວ, ຊັບສິນທີ່ເປັນກຳມະສິດຮ່ວມກັນ, ຊັບສິນສ່ວນຕົວ ຂອງແມ່ຍິງ ແລະ ເດັກ ຫຼື ເຮັດໃຫ້ສູນເສຍໂອກາດໃນການສ້າງລາຍໄດ້ ຫຼື ຜົນປະໂຫຍດອື່ນທາງເສດຖະກິດ ເປັນຕົ້ນ ການທຳລາຍ, ຈູດເຜົາ, ມ້າງເພເຮືອນຊານ, ວັດຖຸສິ່ງຂອງ, ການຊຸກເຊື່ອງ, ການຄອບຄອງ, ໂອນ, ນຳໃຊ້ ຫຼື ແບ່ງປັນຊັບສິນ ໂດຍບໍ່ຖືກຕ້ອງ, ການໃຫ້ຄ່າແຮງງານ ຫຼື ປະຕິບັດນະໂຍບາຍ ບໍ່ເທົ່າທຽມກັບເພດຊາຍ, ການກີດກັ້ນບໍ່ໃຫ້ເຂົ້າຮ່ວມ ຫຼື ເຄື່ອນໄຫວວຽກງານໃດໜຶ່ງ ທັງໆທີ່ແມ່ຍິງ ແລະ ເດັກ ມີເງື່ອນໄຂ ແລະ ຄວາມສາມາດ.

**ມາດຕາ 17 ພຶດຕິກຳທີ່ເປັນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ**

ພຶດຕິກຳທີ່ເປັນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ມີ ດັ່ງນີ້:

1. ການທາລຸນ, ການທໍລະມານ, ການທຸບຕີ, ການບັງຄັບ, ການຂົ່ມຂູ່, ການໂຍນເດັກຖິ້ມ, ການກະທຳທີ່ຫຍາບຊ້າ ຫຼື ການປະພຶດອື່ນໂດຍເຈດຕະນາ ທີ່ແຕະຕ້ອງຕໍ່ສຸຂະພາບ, ຊີວິດ ຫຼື ຈິດໃຈ;

2. ການນິນທາ, ການໃສ່ຮ້າຍ, ການປ້ອຍດ່າ, ການເຍາະເຍີ້ຍສຽດສີ, ການໝິ່ນປະໝາດ ຫຼື ການປະພຶດອື່ນ ໂດຍເຈດຕະນາ ທີ່ເຮັດໃຫ້ເສື່ອມເສຍຊື່ສຽງ, ກຽດສັກສີ ຫຼື ຈິດໃຈ;

3. ການຈຳແນກ, ການເຮັດໃຫ້ໂດດດ່ຽວ, ການໄລ່ອອກຈາກທີ່ພັກອາໄສ ຫຼື ໃຫ້ອອກຈາກວຽກ ໂດຍບໍ່ຖືກຕ້ອງ ຫຼື ສ້າງຄວາມກົດດັນທາງດ້ານຈິດຕະສາດ;

4. ການບໍ່ໃຫ້ໂອກາດ, ການກີດກັ້ນການປະຕິບັດໜ້າທີ່, ການເຄື່ອນໄຫວວຽກງານທາງເສດຖະກິດ-ສັງຄົມ ຫຼື ກີດກັ້ນການປະຕິບັດສິດ ແລະ ພັນທະຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ;

5. ການທຳລາມົກ, ການທຳອະນາຈານ, ການເຜີຍແຜ່ສິ່ງລາມົກ, ການທຳມິດສະຈານ, ການບັງຄັບຮ່ວມເພດ, ການຮ່ວມເພດກັບເດັກ, ການຂົ່ມຂືນທຳຊຳເລົາ, ການບັງຄັບເປັນໂສເພນີ, ການຄ້າໂສເພນີ ຫຼື ການລ່ວງລະເມີດທາງເພດດ້ວຍຮູບການອື່ນ;

6. ການລັກພາຕົວ, ການບັງຄັບໃຫ້ແຕ່ງດອງ ຫຼື ຢ່າຮ້າງ, ການກີດກັ້ນການແຕ່ງດອງ ຫຼື ຢ່າຮ້າງ, ການແຕ່ງດອງແລ້ວນຳໄປຂາຍ;

7. ການບໍ່ປະຕິບັດພັນທະໃນການເບິ່ງແຍງລ້ຽງດູ ແລະ ສຶກສາອົບຮົມລູກ, ບໍ່ຊ່ວຍກັນທຳມາຫາກິນ ຫຼື ການບໍ່ເບິ່ງແຍງດູແລເດັກ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ;

8. ການຄອບຄອງ, ຍ້າຍ, ໂອນ, ນຳໃຊ້, ແບ່ງປັນ, ຍຶດ, ຊຸກເຊື່ອງ ຫຼື ການທຳລາຍຊັບ ໂດຍບໍ່ຖືກຕ້ອງຕາມກົດໝາຍ;

9. ການໃຊ້ແຮງງານເດັກ, ການບັງຄັບໃຫ້ ອອກແຮງງານ ຫຼື ໃຫ້ປະກອບສ່ວນທາງດ້ານການເງິນ;

10. ການປະພຶດອື່ນທີ່ເປັນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ.

## ພາກທີ III
## ການປ້ອງກັນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ

**ມາດຕາ 18 ການປ້ອງກັນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ**

ການປ້ອງກັນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ປະຕິບັດ ດັ່ງນີ້:

1. ການປູກຈິດສຳນຶກກ່ຽວກັບການຕ້ານ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງ;
2. ການສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ ແລະ ສິດສະເໝີພາບຍິງ-ຊາຍ;
3. ການສົ່ງເສີມສິດທິເດັກ;
4. ການສ້າງຄວາມເຂັ້ມແຂງໃຫ້ອົງການຈັດຕັ້ງທີ່ກ່ຽວຂ້ອງ;

5. ການຄົ້ນຄວ້າ ແລະ ເກັບກຳຂໍ້ມູນ;
6. ຄວາມຮັບຜິດຊອບຂອງການຈັດຕັ້ງໃນສັງຄົມ;
7. ຄວາມຮັບຜິດຊອບຂອງສະມາຊິກໃນຄອບຄົວ;
8. ຄວາມຮັບຜິດຊອບຂອງແມ່ຍິງ;
9. ຄວາມຮັບຜິດຊອບຂອງຜູ້ຊາຍ.

**ມາດຕາ 19 ການປູກຈິດສຳນຶກກ່ຽວກັບການຕ້ານ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງ**

ການປູກຈິດສຳນຶກກ່ຽວກັບການຕ້ານ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ເປັນວຽກງານໜຶ່ງທີ່ສຳຄັນຂອງລັດ, ຂອງບຸກຄົນ, ນິຕິບຸກຄົນ ແລະ ທຸກພາກສ່ວນໃນສັງຄົມ ເພື່ອເຮັດໃຫ້ທົ່ວປວງຊົນຮັບຮູ້ ແລະ ເຂົ້າໃຈ ແນໃສ່ປ່ຽນແປງ ການປະພຶດ, ວັດທະນະທຳ, ຮີດຄອງປະເພນີ, ຄວາມເຊື່ອຖື ແລະ ທັດສະນະຄະຕິ ທີ່ເປັນການໝິ່ນປະໝາດ, ຈຳແນກ ແລະ ກີດໜ່ວງຄວາມກ້າວໜ້າຂອງແມ່ຍິງ ແລະ ເດັກ.

ການປູກຈິດສຳນຶກກ່ຽວກັບການຕ້ານ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ດຳເນີນດ້ວຍຫຼາຍຮູບການ ແລະ ວິທີການ ເປັນຕົ້ນ ສົບຊ້ອນເຂົ້າໃນຫຼັກສູດການສຶກສາ, ການໂຄສະນາເຜີຍແຜ່ທາງກວ້າງ ແລະ ທາງເລິກ ແລະ ການສ້າງກິດຈະກຳຕ່າງໆ ກ່ຽວກັບການຕ້ານ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ.

**ມາດຕາ 20 ການສົ່ງເສີມ ຄວາມກ້າວໜ້າຂອງແມ່ຍິງ ແລະ ສິດສະເໝີພາບຍິງ-ຊາຍ**

ການສົ່ງເສີມ ຄວາມກ້າວໜ້າຂອງແມ່ຍິງ ແລະ ສິດສະເໝີພາບຍິງ-ຊາຍ ເປັນມາດຕະການໜຶ່ງຂອງລັດ ເພື່ອຮັບປະກັນໃຫ້ຍິງ-ຊາຍມີຄຸນຄ່າ ແລະ ໄດ້ຮັບໂອກາດເທົ່າທຽມກັນ ທາງດ້ານການເມືອງ, ເສດຖະກິດ, ການສຶກສາ, ວັດທະນະທຳ-ສັງຄົມ, ຄອບຄົວ, ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ການຕ່າງປະເທດ ຕາມທີ່ໄດ້ກຳນົດໄວ້ໃນລັດຖະທຳມະນູນ ແລະ ກົດໝາຍ.

ການສ້າງເງື່ອນໄຂໃຫ້ແມ່ຍິງຮູ້ຈັກສິດຂອງຕົນ ແລະ ເປັນເຈົ້າການໃນການນຳໃຊ້ສິດດັ່ງກ່າວ ລວມທັງ ການສ້າງຄວາມເຂັ້ມແຂງທາງດ້ານເສດຖະກິດໃຫ້ແມ່ຍິງ ດ້ວຍການເຂົ້າເຖິງການສຶກສາ, ການຝຶກອົບຮົມວິຊາຊີບ, ການພັດທະນາສີມືແຮງງານ ແລະ ແຫຼ່ງທຶນທີ່ຈຳເປັນ ເພື່ອໃຫ້ແມ່ຍິງມີວຽກເຮັດງານທຳ ແລະ ມີຊີວິດທີ່ດີ.

**ມາດຕາ 21 ການສົ່ງເສີມສິດທິເດັກ**

ການສົ່ງເສີມສິດທິເດັກ ເປັນມາດຕະການຂອງລັດ ເພື່ອສ້າງຄວາມເຂັ້ມແຂງ ໃຫ້ເດັກໄດ້ຮັບສິດ ແລະ ໄດ້ຮັບການປົກປ້ອງຈາກການໃຊ້ຄວາມຮຸນແຮງໃນຄອບຄົວ ແລະ ສະຖານທີ່ອື່ນ ດ້ວຍການສ້າງສະຕິສຳນຶກກ່ຽວກັບສິດທິຂອງເດັກ, ການເບິ່ງແຍງລ້ຽງດູ, ການສຶກສາ, ການພັດທະນາ ແລະ ການມີສ່ວນຮ່ວມຕາມໄວອາຍຸທີ່ເໝາະສົມຂອງເດັກ.

**ມາດຕາ 22 ການສ້າງຄວາມເຂັ້ມແຂງໃຫ້ອົງການຈັດຕັ້ງທີ່ກ່ຽວຂ້ອງ**

ການສ້າງຄວາມເຂັ້ມແຂງໃຫ້ອົງການຈັດຕັ້ງທີ່ກ່ຽວຂ້ອງກັບວຽກງານຕ້ານ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ເປັນຕົ້ນ ຄະນະໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ, ໜ່ວຍງານໃຫ້ຄໍາປຶກສາ, ຕາໜ່າງ ຫຼື ຄະນະກໍາມະການປົກປ້ອງ ແລະ ຊ່ວຍເຫຼືອເດັກ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ເຈົ້າໜ້າທີ່ຕໍາຫຼວດ, ອົງການໄອຍະການປະຊາຊົນ ແລະ ສານປະຊາຊົນ ດ້ວຍການບໍາລຸງ, ສ້າງ, ຈັດຝຶກອົບຮົມ ແລະ ສໍາມະນາແລກປ່ຽນບົດຮຽນ, ຂໍ້ມູນ ຂ່າວສານ ກ່ຽວກັບວຽກງານດັ່ງກ່າວ ພ້ອມກັນນັ້ນ ລັດ ແລະ ສັງຄົມ ປະກອບງົບປະມານ, ທຶນຮອນ, ບຸກຄະລາກອນ, ວັດຖຸປະກອນ ແລະ ພາຫະນະຢ່າງເໝາະສົມ.

**ມາດຕາ 23 ການຄົ້ນຄວ້າ ແລະ ເກັບກໍາຂໍ້ມູນ**

ການຄົ້ນຄວ້າ ແລະ ເກັບກໍາຂໍ້ມູນກ່ຽວກັບການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ເປັນວຽກທີ່ສໍາຄັນ ເພື່ອໃຊ້ເປັນຂໍ້ມູນພື້ນຖານໃຫ້ແກ່ການສ້າງ ແລະ ປັບປຸງນະໂຍບາຍ, ກົດໝາຍ, ລະບຽບການ ແລະ ແຜນການກ່ຽວກັບການຕ້ານ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ.

**ມາດຕາ 24 ຄວາມຮັບຜິດຊອບຂອງການຈັດຕັ້ງໃນສັງຄົມ**

ການຈັດຕັ້ງທຸກພາກສ່ວນໃນສັງຄົມ ມີຄວາມຮັບຜິດຊອບໃນການປ້ອງກັນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ດ້ວຍການມີສ່ວນຮ່ວມໃນການສົ່ງເສີມສິດຂອງແມ່ຍິງ ແລະ ເດັກ, ໃນການປູກຈິດສໍານຶກ, ໃນການສ້າງ ແລະ ປັບປຸງນະໂຍບາຍ, ກົດໝາຍ, ລະບຽບການ ແລະ ເຂົ້າຮ່ວມກິດຈະກໍາກ່ຽວກັບການຕ້ານ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ພ້ອມກັນນັ້ນ ກໍເປັນເຈົ້າການໃນການປະສານສົມທົບ, ຮ່ວມມື ແລະ ຈັດຕັ້ງປະຕິບັດນະໂຍບາຍ, ກົດໝາຍ ແລະ ລະບຽບການດັ່ງກ່າວ ໃຫ້ມີປະສິດທິຜົນ.

**ມາດຕາ 25 ຄວາມຮັບຜິດຊອບຂອງສະມາຊິກໃນຄອບຄົວ**

ສະມາຊິກໃນຄອບຄົວ ມີຄວາມຮັບຜິດຊອບໃນການສຶກສາອົບຮົມ, ຕັກເຕືອນສະມາຊິກອື່ນໃນຄອບຄົວຕົນ ໃຫ້ເຄົາລົບສິດຂອງແມ່ຍິງ ແລະ ເດັກ, ສົ່ງເສີມຄວາມສະເໝີພາບຍິງ-ຊາຍ ແລະ ຕ້ານທຸກພຶດຕິກໍາທີ່ເປັນການໃຊ້ຄວາມຮຸນແຮງໃນຄອບຄົວ ແລະ ສັງຄົມ ພ້ອມກັນນັ້ນ ກໍສົ່ງເສີມແມ່ຍິງ ແລະ ເດັກ ໃນຄອບຄົວ ໃຫ້ມີການພັດທະນາຢ່າງຮອບດ້ານ.

**ມາດຕາ 26 ຄວາມຮັບຜິດຊອບຂອງແມ່ຍິງ**

ແມ່ຍິງ ຕ້ອງເປັນເຈົ້າການພັດທະນາຕົນເອງ ໃຫ້ມີຄວາມເຂັ້ມແຂງ ທາງດ້ານຮ່າງກາຍ, ຈິດໃຈ, ຄຸນສົມບັດ, ມາລະຍາດ, ການສຶກສາ, ວິຊາຊີບ ແລະ ສີມືແຮງງານ, ຍົກສູງບົດບາດຂອງຕົນ

ທາງດ້ານການເມືອງ, ເສດຖະກິດ, ວັດທະນະທຳ-ສັງຄົມ, ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ການຕ່າງປະເທດ.

ແມ່ຍິງ ມີຄວາມຮັບຜິດຊອບ ແລະ ເປັນເຈົ້າການໃນການປົກປ້ອງສິດ ແລະ ຜົນປະໂຫຍດ ອັນຊອບທຳຂອງຕົນ ແລະ ຂອງແມ່ຍິງດ້ວຍກັນ, ຊຸກຍູ້ ແລະ ເຂົ້າຮ່ວມວຽກງານປ້ອງກັນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ພ້ອມກັນນັ້ນ ກໍບໍ່ໃຫ້ເອົາຄວາມເຊື່ອຖື ແລະ ຮີດຄອງປະເພນີ ເປັນສິ່ງກີດໜ່ວງຕົນເອງ.

### ມາດຕາ 27 ຄວາມຮັບຜິດຊອບຂອງຜູ້ຊາຍ

ຜູ້ຊາຍ ມີຄວາມຮັບຜິດຊອບ ແລະ ເປັນເຈົ້າການໃນການປ້ອງກັນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ, ປັບປ່ຽນພຶດຕິກຳ ແລະ ຍຸດຕິການໃຊ້ຄວາມຮຸນແຮງ, ມີທັດສະນະຄະຕິທີ່ດີ, ເຄົາລົບສິດສ່ວນບຸກຄົນຂອງແມ່ຍິງ ແລະ ເດັກ, ຮັບຮູ້ ແລະ ປະຕິບັດພັນທະຂອງຕົນ ເພື່ອໃຫ້ແມ່ຍິງ ແລະ ເດັກ ໄດ້ໃຊ້ສິດສະເໝີພາບຍິງ-ຊາຍ ແລະ ສິດທິເດັກ ພ້ອມກັນນັ້ນ ກໍບໍ່ໃຫ້ເອົາຄວາມເຊື່ອຖື ແລະ ຮີດຄອງປະເພນີ ເປັນຂໍ້ອ້າງເພື່ອໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ.

ຜູ້ຊາຍ ຕ້ອງເປັນເຈົ້າການໃນການໂຄສະນາ, ຊວນເຊື່ອ, ສ້າງສະຕິໃນການຕ້ານ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ.

## ພາກທີ IV

## ການປົກປ້ອງ, ຊ່ວຍເຫຼືອ ແລະ ມາດຕະການປົກປ້ອງຜູ້ຖືກເຄາະຮ້າຍ

## ໝວດທີ 1

## ການປົກປ້ອງ ແລະ ຊ່ວຍເຫຼືອຜູ້ຖືກເຄາະຮ້າຍ

### ມາດຕາ 28 ການປົກປ້ອງ ແລະ ຊ່ວຍເຫຼືອຜູ້ຖືກເຄາະຮ້າຍໃນເບື້ອງຕົ້ນ

ສະມາຊິກຄອບຄົວ, ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ພົບເຫັນ ຫຼື ຮູ້ເຫດການກ່ຽວກັບການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ຕ້ອງໃຫ້ການປົກປ້ອງ ແລະ ຊ່ວຍເຫຼືອຕາມລັກສະນະຂອງຄວາມຮຸນແຮງ ແລະ ຄວາມຈຳເປັນຮີບດ່ວນດ້ວຍວິທີການເຂົ້າໄປຫ້າມ, ກີດກັ້ນການໃຊ້ຄວາມຮຸນແຮງ, ສຶກສາອົບຮົມຄູ່ກໍລະນີດ້ວຍຕົນເອງ ຫຼື ຮ້ອງຂໍໃຫ້ບຸກຄົນ, ການຈັດຕັ້ງອື່ນ ເຂົ້າມາຊ່ວຍເຫຼືອຢ່າງທັນການ. ໃນກໍລະນີການໃຊ້ຄວາມຮຸນແຮງ ເຮັດໃຫ້ມີການບາດເຈັບ ຕ້ອງນຳສົ່ງຄົນເຈັບໄປໂຮງໝໍ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ຖືກຮ້ອງຂໍໃຫ້ປົກປ້ອງ ແລະ ຊ່ວຍເຫຼືອຜູ້ຖືກເຄາະຮ້າຍ ກໍຕ້ອງໃຫ້ການປົກປ້ອງ ແລະ ຊ່ວຍເຫຼືອບົນພື້ນຖານຄວາມສາມາດຂອງຕົນ ຕາມວິທີການທີ່ໄດ້ກ່າວມາໃນວັກເທິງນີ້. ຜູ້ໃຫ້ການປົກປ້ອງ ແລະ ຊ່ວຍເຫຼືອຜູ້ຖືກເຄາະຮ້າຍດ້ວຍຄວາມບໍລິສຸດໃຈ ຈະໄດ້ຮັບການຄຸ້ມຄອງ ແລະ ປົກປ້ອງຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 29 ການແຈ້ງ ຫຼື ລາຍງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ຮູ້ ຫຼື ໄດ້ເຫັນກ່ຽວກັບການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ຕ້ອງແຈ້ງ ຫຼື ລາຍງານເຫດການໃຫ້ອົງການປົກຄອງບ້ານ, ການຈັດຕັ້ງບ່ອນເກີດເຫດ, ສະຫະພັນແມ່ຍິງ, ຕາໜ່າງ ຫຼື ຄະນະກຳມະການປົກປ້ອງ ແລະ ຊ່ວຍເຫຼືອເດັກ ຫຼື ເຈົ້າໜ້າທີ່ຕຳຫຼວດໃນທັນທີ.

ຖ້າແພດ, ຜູ້ເຮັດວຽກກ່ຽວກັບສຸຂະພາບ, ຄູ, ອາຈານ, ຜູ້ເບິ່ງແຍງດູແລເດັກ ຫຼື ພະນັກງານວິຊາການອື່ນທີ່ປະຕິບັດໜ້າທີ່ ຫາກພົບເຫັນ ຫຼື ຮູ້ເຫດການກ່ຽວກັບການໃຊ້ຄວາມຮຸນແຮງຕໍ່ ແມ່ຍິງ ແລະ ເດັກ ຕ້ອງແຈ້ງ ຫຼື ລາຍງານຕໍ່ ການຈັດຕັ້ງຂອງຕົນ ຫຼື ເຈົ້າໜ້າທີ່ຕຳຫຼວດ ບ່ອນເກີດເຫດ.

ໃນກໍລະນີ ຜູ້ຖືກເຄາະຮ້າຍ ຫາກເປັນເດັກນັ້ນ ການຈັດຕັ້ງທີ່ໄດ້ຮັບການລາຍງານ ຕ້ອງປະສານສົມທົບກັບຕາໜ່າງ ຫຼື ຄະນະກຳມະການປົກປ້ອງ ແລະ ຊ່ວຍເຫຼືອເດັກ ເພື່ອເຂົ້າຮ່ວມໃນການປົກປ້ອງ ແລະ ຊ່ວຍເຫຼືອເດັກຢ່າງທັນການ.

**ມາດຕາ 30 ການຕອບສະໜອງ ແລະ ການສົ່ງຕໍ່**

ການຈັດຕັ້ງ ຫຼື ເຈົ້າໜ້າທີ່ຕຳຫຼວດ ທີ່ໄດ້ຮັບການລາຍງານ ຫຼື ແຈ້ງຄວາມກ່ຽວກັບການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ຕ້ອງຮີບຮ້ອນເຂົ້າໄປສະຖານທີ່ເກີດເຫດ ເພື່ອຍຸດຕິການໃຊ້ຄວາມຮຸນແຮງ ແລະ ໃຫ້ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍ, ສອບຖາມ, ສຳພາດ, ເກັບກຳຂໍ້ມູນ ແລະ ປະເມີນສະພາບຂອງຜູ້ຖືກເຄາະຮ້າຍ, ຖ້າຈຳເປັນ ກໍໃຫ້ປະສານງານກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອສົ່ງຕໍ່ຜູ້ຖືກເຄາະຮ້າຍ ແລະ ເດັກທີ່ຕິດຕາມ ຖ້າຫາກມີ ແນໃສ່ໃຫ້ພວກກ່ຽວໄດ້ຮັບການປົກປ້ອງ ແລະ ຊ່ວຍເຫຼືອທີ່ຈຳເປັນຕາມທີ່ໄດ້ກຳນົດໄວ້ໃນມາດຕາ 32 ຂອງກົດໝາຍ ສະບັບນີ້.

**ມາດຕາ 31 ສິດຂອງຜູ້ຖືກເຄາະຮ້າຍ**

ຜູ້ຖືກເຄາະຮ້າຍຈາກການໃຊ້ຄວາມຮຸນແຮງ ມີ ສິດ ດັ່ງນີ້:

1. ຮ້ອງຂໍ ຫຼື ໄດ້ຮັບການຊ່ວຍເຫຼືອຈາກສະມາຊິກໃນຄອບຄົວ, ບຸກຄົນທີ່ຢູ່ໃກ້ຄຽງ, ອົງການປົກຄອງບ້ານ, ການຈັດຕັ້ງບ່ອນຕົນ ຫຼື ຜູ້ໃຊ້ຄວາມຮຸນແຮງສັງກັດຢູ່, ສະຫະພັນແມ່ຍິງ, ຕາໜ່າງ ຫຼື ຄະນະກຳມະການປົກປ້ອງ ແລະ ຊ່ວຍເຫຼືອເດັກ, ເຈົ້າໜ້າທີ່ຕຳຫຼວດ ຫຼື ອົງການອື່ນທີ່ມີສິດອຳນາດ;

2. ໄດ້ຮັບການເຄົາລົບສິດ, ຖືກປະຕິບັດດ້ວຍຄວາມເອົາໃຈໃສ່ ແລະ ວິທີການທີ່ເປັນມິດ;

3. ແຈ້ງກ່ຽວກັບການໃຊ້ຄວາມຮຸນແຮງ ໃຫ້ອົງການປົກຄອງບ້ານ, ເຈົ້າໜ້າທີ່ຕຳຫຼວດ, ສະຫະພັນແມ່ຍິງ ຫຼື ຕາໜ່າງ ຫຼື ຄະນະກຳມະການປົກປ້ອງ ແລະ ຊ່ວຍເຫຼືອເດັກ ເພື່ອໃຫ້ການປົກປ້ອງ ແລະ ຊ່ວຍເຫຼືອ ຫຼື ດຳເນີນຄະດີຕໍ່ຜູ້ໃຊ້ຄວາມຮຸນແຮງ;

4. ເລືອກຮູບການແກ້ໄຂການໃຊ້ຄວາມຮຸນແຮງ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 47 ຂອງກົດໝາຍສະບັບນີ້;

5. ຮ້ອງຂໍ ແລະ ໄດ້ຮັບການປົກປ້ອງ ເນື່ອງຈາກຕົນ ໄດ້ຖືກບັງຄັບ, ຂົ່ມຂູ່ ຫຼື ໄດ້ຮັບຄວາມອັນຕະລາຍທຸກຮູບແບບ ລວມທັງສະມາຊິກຄອບຄົວ ຫຼື ເດັກທີ່ຕິດຕາມ;

6. ໄດ້ຮັບການຊ່ວຍເຫຼືອທີ່ຈຳເປັນ ເປັນຕົ້ນ ການໃຫ້ຄຳປຶກສາ, ທີ່ພັກເຊົາທີ່ປອດໄພຊົ່ວຄາວ, ດ້ານການແພດ, ດ້ານກົດໝາຍ, ການສຶກສາ, ການຝຶກອົບຮົມວິຊາຊີບ ແລະ ການກັບຄືນສູ່ຄອບຄົວ ແລະ ສັງຄົມ;

7. ໄດ້ຮັບການທົດແທນຄ່າເສຍຫາຍ ແລະ ຄ່າປົວແປງຈິດໃຈ;

8. ໄດ້ຮັບການຮັກສາຄວາມລັບ;

9. ໄດ້ຮັບການປົກປ້ອງ ແລະ ຊ່ວຍເຫຼືອຈາກລັດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ ແລະ ການຈັດຕັ້ງສັງຄົມຕາມກົດໝາຍ ແລະ ລະບຽບການ;

10. ມີສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

### ມາດຕາ 32 ການປົກປ້ອງ ແລະ ຊ່ວຍເຫຼືອທີ່ຈຳເປັນ

ເມື່ອພົບເຫັນ ຫຼື ໄດ້ຮັບການລາຍງານກ່ຽວກັບການໃຊ້ຄວາມຮຸນແຮງແລ້ວ ຂະແໜງການ ແລະ ພາກສ່ວນທີ່ກ່ຽວຂ້ອງ ຕ້ອງໃຫ້ການປົກປ້ອງ ແລະ ຊ່ວຍເຫຼືອຜູ້ຖືກເຄາະຮ້າຍ ແລະ ເດັກ ທີ່ຕິດຕາມ ດ້ານຕ່າງໆ ດັ່ງນີ້:

1. ສັງຄົມສົງເຄາະ;
2. ການໃຫ້ຄຳປຶກສາ;
3. ທີ່ພັກເຊົາຊົ່ວຄາວທີ່ປອດໄພ;
4. ການເບິ່ງແຍງລ້ຽງດູເດັກ;
5. ການແພດ;
6. ກົດໝາຍ;
7. ເສດຖະກິດ;
8. ການສຶກສາ ແລະ ຝຶກອົບຮົມວິຊາຊີບ;
9. ການກັບຄືນສູ່ຄອບຄົວ ແລະ ສັງຄົມ.

### ມາດຕາ 33 ການຊ່ວຍເຫຼືອດ້ານສັງຄົມສົງເຄາະ

ການຊ່ວຍເຫຼືອດ້ານສັງຄົມສົງເຄາະ ສາມາດດຳເນີນໄດ້ໃນທຸກໄລຍະທີ່ມີການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ຊຶ່ງພະນັກງານສັງຄົມສົງເຄາະ ຫຼື ນັກສັງຄົມສົງເຄາະ ໃຫ້ການຊ່ວຍເຫຼືອ ດັ່ງນີ້:

1. ປະເມີນສະພາບຂອງຜູ້ຖືກເຄາະຮ້າຍ ເປັນຕົ້ນ ຄວາມສ່ຽງ, ການພັດທະນາ ແລ້ວສ້າງແຜນການຊ່ວຍເຫຼືອຜູ້ຖືກເຄາະຮ້າຍ;

2. ປະສານງານກັບເຈົ້າໜ້າທີ່ທີ່ກ່ຽວຂ້ອງ ເພື່ອໃຫ້ການປົກປ້ອງ ແລະ ຊ່ວຍເຫຼືອທີ່ຈຳເປັນ ແລະ ຕິດຕາມການປົກປ້ອງ ແລະ ຊ່ວຍເຫຼືອດັ່ງກ່າວ;

3. ລາຍງານສະພາບກ່ຽວກັບຜູ້ຖືກເຄາະຮ້າຍ ແລະ ສະເໜີວິທີທາງແກ້ໄຂໃຫ້ເຈົ້າໜ້າທີ່ທີ່ກ່ຽວຂ້ອງ;

4. ເຂົ້າຮ່ວມໃນການສຳພາດ, ການເອົາຄຳໃຫ້ການ ຜູ້ຖືກເຄາະຮ້າຍ, ຕິດຕາມການໄກ່ເກ້ຍ ແລະ ການດຳເນີນຄະດີຕໍ່ຜູ້ໃຊ້ຄວາມຮຸນແຮງ.

**ມາດຕາ 34 ການຊ່ວຍເຫຼືອດ້ານການໃຫ້ຄຳປຶກສາ**

ການຊ່ວຍເຫຼືອດ້ານການໃຫ້ຄຳປຶກສາ ເປັນຕົ້ນ ກ່ຽວກັບຈິດໃຈ, ກົດໝາຍ ແລະ ສຸຂະພາບ ໃຫ້ດຳເນີນໃນທຸກໄລຍະ ເພື່ອແກ້ໄຂບັນຫາອັນເນື່ອງມາຈາກການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ລວມທັງ ການສະໜອງຂໍ້ມູນ ຂ່າວສານ ກ່ຽວກັບສິດຂອງແມ່ຍິງ ແລະ ເດັກ ແລະ ສິດຂອງຜູ້ຖືກເຄາະຮ້າຍ.

**ມາດຕາ 35 ການຊ່ວຍເຫຼືອດ້ານທີ່ພັກເຊົາຊົ່ວຄາວທີ່ປອດໄພ**

ຜູ້ຖືກເຄາະຮ້າຍ ທີ່ມີຄວາມຈຳເປັນຕ້ອງໄດ້ແຍກອອກຈາກຜູ້ໃຊ້ຄວາມຮຸນແຮງ ຊຶ່ງບໍ່ມີທີ່ພັກອາໄສ ແລະ ເດັກທີ່ຕິດຕາມ ຈະໄດ້ຮັບການຊ່ວຍເຫຼືອດ້ານທີ່ພັກເຊົາຊົ່ວຄາວທີ່ປອດໄພ ຈາກສະຫະພັນແມ່ຍິງ ແລະ ຂະແໜງການແຮງງານ ແລະ ສະຫວັດດີການສັງຄົມ ໂດຍປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເປັນຕົ້ນ ອາຫານ, ຢາປົວພະຍາດ, ເຄື່ອງນຸ່ງຫົ່ມ ແລະ ເຄື່ອງໃຊ້ສອຍ ທີ່ຈຳເປັນຕາມຄວາມເປັນຈິງ.

**ມາດຕາ 36 ການຊ່ວຍເຫຼືອໃນການເບິ່ງແຍງລ້ຽງດູເດັກ**

ເດັກທີ່ຖືກເຄາະຮ້າຍ ຈາກການໃຊ້ຄວາມຮຸນແຮງ ດ້ວຍການກະທຳຂອງພໍ່ແມ່ ຫຼື ຜູ້ປົກຄອງ ຈະໄດ້ຮັບການຊ່ວຍເຫຼືອໃນການເບິ່ງແຍງລ້ຽງດູ ຈາກຂະແໜງການແຮງງານ ແລະ ສະຫວັດດີການສັງຄົມ ໂດຍປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຖ້າຫາກວ່າການໃຊ້ຄວາມຮຸນແຮງນັ້ນ ມີຄວາມສ່ຽງຈະສືບຕໍ່ ແລະ ຍາດພີ່ນ້ອງ ກໍບໍ່ມີເງື່ອນໄຂທີ່ຈະເບິ່ງແຍງລ້ຽງດູເດັກ.

**ມາດຕາ 37 ການຊ່ວຍເຫຼືອດ້ານການແພດ**

ຜູ້ຖືກເຄາະຮ້າຍ ທີ່ໄດ້ຮັບຄວາມເສຍຫາຍທາງດ້ານຮ່າງກາຍ ຫຼື ຈິດໃຈ ຈະໄດ້ຮັບການຊ່ວຍເຫຼືອດ້ານການແພດ ດັ່ງນີ້:

1. ໄດ້ຮັບການກວດ, ປິ່ນປົວ ແລະ ຢັ້ງຢືນສຸຂະພາບ;
2. ໄດ້ຮັບຄຳປຶກສາແນະນຳດ້ານສຸຂະພາບຈິດ ແລະ ຈິດບຳບັດ.

ໃນກໍລະນີ ຜູ້ຖືກເຄາະຮ້າຍເປັນແມ່ຍິງນັ້ນ ການກວດສຸຂະພາບໃຫ້ດຳເນີນໂດຍແພດຍິງ, ຖ້າກວດໂດຍແພດຊາຍ ກໍໃຫ້ມີການເຂົ້າຮ່ວມຂອງນັກສັງຄົມສົງເຄາະຜູ້ຍິງ ຫຼື ພະຍາບານຍິງ.

ໃນກໍລະນີ ເຈົ້າໜ້າທີ່ທີ່ກ່ຽວຂ້ອງ ຮຽກຮ້ອງໃຫ້ມີການກວດສຸຂະພາບດ້ານນິຕິວິທະຍາ ຕ້ອງໄດ້ຮັບຄຳເຫັນດີຈາກຜູ້ຖືກເຄາະຮ້າຍເສຍກ່ອນ.

ໃນກໍລະນີ ຜູ້ຖືກເຄາະຮ້າຍເປັນເດັກທີ່ມີອາຍຸຕ່ຳກວ່າ ສິບປີ ໃຫ້ມີການຕົກລົງເຫັນດີຈາກພໍ່ແມ່ ຫຼື ຜູ້ປົກຄອງ.

ຜົນກວດດ້ານການແພດ ແລະ ຂໍ້ມູນຂອງຜູ້ຖືກເຄາະຮ້າຍ ຕ້ອງຮັກສາເປັນຄວາມລັບ ເວັ້ນເສັຍແຕ່ການສະໜອງໃຫ້ອົງການທີ່ມີສິດອຳນາດຂອງລັດ.

**ມາດຕາ 38 ການຊ່ວຍເຫຼືອດ້ານກົດໝາຍ**

ຜູ້ຖືກເຄາະຮ້າຍ ໄດ້ຮັບການຊ່ວຍເຫຼືອດ້ານກົດໝາຍ ດ້ວຍການໄດ້ຮັບຄຳປຶກສາ, ຄຳແນະນຳດ້ານກົດໝາຍ, ມີທະນາຍຄວາມ ຫຼື ຜູ້ປົກປ້ອງອື່ນ ເປັນຕົວແທນໃນການຕໍ່ສູ້ຄະດີ ເພື່ອປົກປ້ອງສິດ ແລະ ຜົນປະໂຫຍດຂອງຕົນ.

ໃນກໍລະນີ ຜູ້ຖືກເຄາະຮ້າຍ ບໍ່ຮູ້ພາສາລາວ ກໍສາມາດໄດ້ຮັບການຊ່ວຍເຫຼືອຈາກຜູ້ແປພາສາ ໃນເວລາທີ່ຮ້ອງຂໍ ລວມທັງການແປເອກະສານທາງກົດໝາຍທີ່ຈຳເປັນ.

ຜູ້ຖືກເຄາະຮ້າຍ ທີ່ເປັນຜູ້ທຸກຍາກ ຈະໄດ້ຮັບການຊ່ວຍເຫຼືອດ້ານກົດໝາຍໂດຍບໍ່ເສັຍຄ່າ.

**ມາດຕາ 39 ການຊ່ວຍເຫຼືອດ້ານເສດຖະກິດ**

ຜູ້ຖືກເຄາະຮ້າຍທີ່ທຸກຍາກ ຫຼື ບໍ່ມີເງື່ອນໄຂທາງດ້ານເສດຖະກິດ ຈະໄດ້ຮັບການຊ່ວຍເຫຼືອດ້ານເສດຖະກິດຈາກຂະແໜງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ ເປັນຕົ້ນ ການຊ່ວຍເຫຼືອເບື້ອງຕົ້ນດ້ານການເງິນ, ການເຂົ້າຫາແຫຼ່ງທຶນ ຫຼື ການປະກອບອາຊີບໃດໜຶ່ງ ເພື່ອໃຫ້ຜູ້ຖືກເຄາະຮ້າຍ ສາມາດເຄື່ອນໄຫວຫາລ້ຽງຊີບ ແລະ ກຸ້ມຕົນເອງທາງດ້ານເສດຖະກິດ.

**ມາດຕາ 40 ການຊ່ວຍເຫຼືອດ້ານການສຶກສາ ແລະ ຝຶກອົບຮົມວິຊາຊີບ**

ຜູ້ຖືກເຄາະຮ້າຍ ທີ່ເປັນເດັກ, ແມ່ຍິງທີ່ກຳລັງສຶກສາຢູ່ ຫຼື ເດັກທີ່ຕິດຕາມມານຳຜູ້ຖືກເຄາະຮ້າຍ ຕ້ອງໄດ້ຮັບໂອກາດໃນການສືບຕໍ່ສຶກສາຢູ່ໂຮງຮຽນ ຫຼື ສະຖານການສຶກສາ ບ່ອນຜູ້ກ່ຽວຮຽນຢູ່ ຫຼື ຢູ່ໂຮງຮຽນ ຫຼື ສະຖານການສຶກສາອື່ນ ທີ່ມີຄວາມປອດໄພ ຊຶ່ງຂະແໜງການສຶກສາທິການ ແລະ ກິລາ ແລະ ອົງການອື່ນທີ່ກ່ຽວຂ້ອງ ຕ້ອງອຳນວຍຄວາມສະດວກ ແລະ ໃຫ້ການຊ່ວຍເຫຼືອຕາມເງື່ອນໄຂຕົວຈິງ.

ສຳລັບ ຜູ້ຖືກເຄາະຮ້າຍ ທີ່ບໍ່ມີເງື່ອນໄຂສຶກສາຕໍ່ ກໍມີສິດໄດ້ຮັບການຝຶກອົບຮົມວິຊາຊີບໃດໜຶ່ງ ເພື່ອໃຫ້ຜູ້ກ່ຽວມີວຽກເຮັດງານທຳ, ມີລາຍຮັບ ແລະ ຍົກລະດັບຊີວິດການເປັນຢູ່ໃຫ້ດີຂຶ້ນ ຊຶ່ງຂະແໜງການແຮງງານ ແລະ ສະຫວັດດີການສັງຄົມ ສົມທົບກັບຂະແໜງການ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງເປັນຜູ້ຮັບຜິດຊອບຕາມພາລະບົດບາດຂອງຕົນ.

**ມາດຕາ 41 ການຊ່ວຍເຫຼືອໃນການກັບຄືນສູ່ຄອບຄົວ ແລະ ສັງຄົມ**

ຜູ້ຖືກເຄາະຮ້າຍ ໄດ້ຮັບການຊ່ວຍເຫຼືອໃນການກັບຄືນສູ່ຄອບຄົວ ແລະ ສັງຄົມ ຊຶ່ງພະນັກງານສັງຄົມສົງເຄາະ, ນັກສັງຄົມສົງເຄາະ ຫຼື ເຈົ້າໜ້າທີ່ທີ່ກ່ຽວຂ້ອງ ຕ້ອງປະເມີນສະພາບຜູ້ຖືກເຄາະຮ້າຍ, ຄອບຄົວ, ການຈັດຕັ້ງ ແລະ ສະພາບແວດລ້ອມທີ່ຜູ້ຖືກເຄາະຮ້າຍດຳລົງຊີວິດຢູ່. ຖ້າເຫັນວ່າຜູ້ຖືກເຄາະຮ້າຍ ມີຄວາມພ້ອມໃນການກັບຄືນສູ່ຄອບຄົວ, ການຈັດຕັ້ງ ແລະ ສະພາບແວດລ້ອມເດີມ

ແລ້ວ ພະນັກງານສັງຄົມສົງເຄາະ, ນັກສັງຄົມສົງເຄາະ ຫຼື ເຈົ້າໜ້າທີ່ທີ່ກ່ຽວຂ້ອງ ຕ້ອງປະສານກັບເຈົ້າໜ້າທີ່ ຫຼື ການຈັດຕັ້ງທີ່ກ່ຽວຂ້ອງ ເພື່ອນຳສົ່ງຜູ່ກ່ຽວກັບຄືນ ແລະ ມີການຕິດຕາມ ໃນແຕ່ລະໄລຍະ.

ໃນກໍລະນີຜູ້ຖືກເຄາະຮ້າຍ ບໍ່ສາມາດກັບຄືນ ຫຼື ບໍ່ຢາກກັບຄືນນັ້ນ ພະນັກງານສັງຄົມສົງເຄາະ ຫຼື ນັກສັງຄົມສົງເຄາະ ຕ້ອງປະສານກັບເຈົ້າໜ້າທີ່ ຫຼື ການຈັດຕັ້ງທີ່ກ່ຽວຂ້ອງ ເພື່ອຄົ້ນຄວ້າ ຊອກຫາສະຖານທີ່ທີ່ປອດໄພ ແລະ ເໝາະສົມໃຫ້ຜູ້ກ່ຽວຕາມເງື່ອນໄຂຕົວຈິງ.

## ໝວດທີ 2
## ມາດຕະການປົກປ້ອງຜູ້ຖືກເຄາະຮ້າຍ

### ມາດຕາ 42 ມາດຕະການປົກປ້ອງຜູ້ຖືກເຄາະຮ້າຍ

ໃນທຸກໄລຍະຂອງການແກ້ໄຂການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ຖ້າມີຄວາມຈຳເປັນຕ້ອງມີມາດຕະການປົກປ້ອງຜູ້ຖືກເຄາະຮ້າຍ.

ມາດຕະການປົກປ້ອງຜູ້ຖືກເຄາະຮ້າຍ ມີ ດັ່ງນີ້:

1. ບໍ່ໃຫ້ຜູ້ໃຊ້ຄວາມຮຸນແຮງ ມີເງື່ອນໄຂໃຊ້ຄວາມຮຸນແຮງຕໍ່ຜູ້ຖືກເຄາະຮ້າຍຕື່ມອີກ;
2. ໃຫ້ຜູ້ໃຊ້ຄວາມຮຸນແຮງ ຢຸດຕິ ການນາບຂູ່, ກໍ່ກວນຜູ້ຖືກເຄາະຮ້າຍ ຫຼື ສະມາຊິກໃນຄອບຄົວຂອງຜູ້ກ່ຽວ;
3. ໃຫ້ຜູ້ໃຊ້ຄວາມຮຸນແຮງ ຕອບສະໜອງດ້ານການເງິນ ແກ່ຜູ້ຖືກເຄາະຮ້າຍ ລວມທັງການນຳໃຊ້ພາຫານະ ແລະ ຊັບສິ່ງຂອງ ທີ່ຈຳເປັນ;
4. ບໍ່ໃຫ້ຂາຍ, ໂອນ, ທຳລາຍ ຊັບສິນທີ່ເປັນກຳມະສິດຮ່ວມ ຫຼື ສິນສົມສ້າງ;
5. ໃຫ້ຜູ້ໃຊ້ຄວາມຮຸນແຮງ ເຂົ້າບຳບັດ ຖ້າເຫັນວ່າຜູ້ກ່ຽວຫາກ ຕິດເຄື່ອງດື່ມທີ່ມີທາດເຫຼົ້າ, ຕິດຢາເສບຕິດ;
6. ກັກຕົວ, ຈັບຕົວ ຫຼື ກັກຂັງ ຜູ້ໃຊ້ຄວາມຮຸນແຮງ ແລ້ວດຳເນີນຄະດີຕາມກົດໝາຍ;
7. ໃຫ້ການຊ່ວຍເຫຼືອ ທີ່ພັກເຊົາທີ່ປອດໄພ, ດ້ານການແພດ, ດ້ານກົດໝາຍ, ການຝຶກອົບຮົມວິຊາຊີບ ແລະ ການສຶກສາ, ການກັບຄືນສູ່ຄອບຄົວ ແລະ ສັງຄົມແກ່ຜູ້ຖືກເຄາະຮ້າຍ ຕາມແຕ່ລະກໍລະນີ;
8. ນຳໃຊ້ມາດຕະການປົກປ້ອງອື່ນທີ່ເຫັນວ່າຈຳເປັນ.

### ມາດຕາ 43 ການຮ້ອງຂໍ ຫຼື ສະເໜີນຳໃຊ້ມາດຕະການປົກປ້ອງ

ຜູ້ຖືກເຄາະຮ້າຍ, ຜູ້ຕາງໜ້າ ຫຼື ການຈັດຕັ້ງຂອງຜູ້ກ່ຽວ ທີ່ເຫັນວ່າຜູ້ຖືກເຄາະຮ້າຍ ມີຄວາມສ່ຽງຈະຖືກໃຊ້ຄວາມຮຸນແຮງອີກ ຫຼື ຈະມີໄພອັນຕະລາຍ ສາມາດຍື່ນຄຳຮ້ອງຕໍ່ເຈົ້າໜ້າທີ່ຕຳຫຼວດ ຫຼື ອົງການທີ່ກ່ຽວຂ້ອງ ເພື່ອພິຈາລະນານຳໃຊ້ມາດຕະການປົກປ້ອງຢ່າງທັນການ.

ການຈັດຕັ້ງ ຫຼື ເຈົ້າໜ້າທີ່ຕຳຫຼວດ ທີ່ໄດ້ຮັບການລາຍງານ ຫຼື ແຈ້ງຄວາມກ່ຽວກັບການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ຕ້ອງສະເໜີຕໍ່ອົງການທີ່ກ່ຽວຂ້ອງ ເພື່ອພິຈາລະນານຳໃຊ້ມາດຕະການປົກປ້ອງ.

ເມື່ອໄດ້ຮັບຄຳຮ້ອງ ຫຼື ຄຳສະເໜີແລ້ວ ອົງການທີ່ກ່ຽວຂ້ອງ ຕ້ອງພິຈາລະນາອອກຄຳສັ່ງປົກປ້ອງຜູ້ຖືກເຄາະຮ້າຍ ພາຍໃນກຳນົດເວລາ ສາມວັນ ນັບແຕ່ວັນໄດ້ຮັບຄຳຮ້ອງ ຫຼື ຄຳສະເໜີເປັນຕົ້ນໄປ.

**ມາດຕາ 44 ມາດຕະການປົກປ້ອງຮີບດ່ວນ**

ເມື່ອໄດ້ຮັບການລາຍງານ ຫຼື ແຈ້ງຄວາມກ່ຽວກັບການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກແລ້ວ ເຈົ້າໜ້າທີ່ສືບສວນ-ສອບສວນຂອງຕຳຫຼວດ ຕ້ອງໄປຍັງສະຖານທີ່ເກີດເຫດ, ປະເມີນສະພາບຂອງຜູ້ຖືກເຄາະຮ້າຍ ແລະ ຄວາມສ່ຽງທີ່ຈະເກີດມີການໃຊ້ຄວາມຮຸນແຮງອີກ ຖ້າເຫັນວ່າມີຄວາມຈຳເປັນ ແລະ ຮີບດ່ວນ ກໍສາມາດນຳໃຊ້ມາດຕະການປົກປ້ອງຜູ້ຖືກເຄາະຮ້າຍ ແລະ ເດັກທີ່ຕິດຕາມມາໂດຍທັນທີ.

## ພາກທີ V
## ຂໍ້ຫ້າມ

**ມາດຕາ 45 ຂໍ້ຫ້າມສຳລັບເຈົ້າໜ້າທີ່ ຫຼື ການຈັດຕັ້ງທີ່ກ່ຽວຂ້ອງ**

ຫ້າມ ເຈົ້າໜ້າທີ່ ຫຼື ການຈັດຕັ້ງທີ່ກ່ຽວຂ້ອງ ມີ ພຶດຕິກຳໃດໜຶ່ງ ດັ່ງນີ້:

1. ສວຍໃຊ້ການເຄື່ອນໄຫວຕ້ານ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ເພື່ອຫາຜົນປະໂຫຍດສ່ວນຕົວ ໂດຍບໍ່ຖືກຕ້ອງຕາມກົດໝາຍ;
2. ເມີນເສີຍ, ປົດບັງ, ບໍ່ແກ້ໄຂ ຫຼື ແກ້ໄຂການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ບໍ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;
3. ເປີດເຜີຍຂໍ້ມູນກ່ຽວກັບຜູ້ຖືກເຄາະຮ້າຍ ໂດຍບໍ່ໄດ້ຮັບອະນຸຍາດ;
4. ລຳອຽງ ໃນການປະຕິບັດໜ້າທີ່;
5. ສວຍໃຊ້ສິດທິພິເສດຂອງຕົນ ຕໍ່ບຸກຄົນອື່ນ;
6. ມີພຶດຕິກຳອື່ນທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 46 ຂໍ້ຫ້າມສຳລັບບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງອື່ນ**

ຫ້າມ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງອື່ນ ມີພຶດຕິກຳໃດໜຶ່ງ ດັ່ງນີ້:

1. ໃຊ້ຄວາມຮຸນແຮງ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 17 ຂອງກົດໝາຍສະບັບນີ້;
2. ບັງຄັບ, ຊຸກຍູ້, ຍຸແຍ່ ຫຼື ຊ່ວຍເຫຼືອບຸກຄົນອື່ນໃຫ້ໃຊ້ຄວາມຮຸນແຮງ;
3. ແກ້ແຄ້ນ, ຂົ່ມຂູ່ວ່າຈະແກ້ແຄ້ນຜູ້ໃຫ້ການປົກປ້ອງ ແລະ ຊ່ວຍເຫຼືອຜູ້ຖືກເຄາະຮ້າຍ;

4. ກີດກັ້ນຜູ້ພົບເຫັນໃນການໃຫ້ການ ຫຼື ໃຫ້ຄວາມຮ່ວມມືໃນການແກ້ໄຂການໃຊ້ຄວາມຮຸນແຮງ;

5. ເອົາປຽບຝ່າຍກົງກັນຂ້າມ ຫຼື ເຂົ້າຂ້າງຍາດພີ່ນ້ອງ ແລະ ໝູ່ເພື່ອນຂອງຕົນ;

6. ມີພຶດຕິກຳອື່ນທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

## ພາກທີ VI
## ການແກ້ໄຂການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ

**ມາດຕາ 47 ຮູບການແກ້ໄຂການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ**

ການແກ້ໄຂການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ດຳເນີນດ້ວຍ ສອງຮູບການ ດັ່ງນີ້:

1. ການສຶກສາອົບຮົມ, ປະນີປະນອມ ຫຼື ການໄກ່ເກ່ຍ;
2. ການດຳເນີນຄະດີ.

ສຳລັບການໃຊ້ຄວາມຮຸນແຮງ ທີ່ມີຜົນເສຍຫາຍບໍ່ຫຼວງຫຼາຍ ຜູ້ຖືກເຄາະຮ້າຍ ສາມາດເລືອກເອົາຮູບການແກ້ໄຂໃດໜຶ່ງ ແຕ່ໃນກໍລະນີການໃຊ້ຄວາມຮຸນແຮງທີ່ມີຜົນເສຍຫາຍຫຼວງຫຼາຍ ຕ້ອງໄດ້ດຳເນີນຄະດີຕໍ່ຜູ້ໃຊ້ຄວາມຮຸນແຮງ.

## ໝວດທີ 1
## ການສຶກສາອົບຮົມ, ປະນີປະນອມ ຫຼື ການໄກ່ເກ່ຍ

**ມາດຕາ 48 ການສຶກສາອົບຮົມ, ປະນີປະນອມ**

ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ທີ່ມີຜົນເສຍຫາຍບໍ່ຫຼວງຫຼາຍ ໃຫ້ແກ້ໄຂດ້ວຍການສຶກສາອົບຮົມ, ປະນີປະນອມ.

ການສຶກສາອົບຮົມ, ປະນີປະນອມ ສາມາດດຳເນີນໂດຍ:

1. ສະມາຊິກໃນຄອບຄົວ, ຍາດໃກ້ຊິດ ຫຼື ຜູ້ອາວຸໂສໃນບ້ານ;
2. ການຈັດຕັ້ງ ບ່ອນຜູ້ຖືກເຄາະຮ້າຍ ຫຼື ຜູ້ໃຊ້ຄວາມຮຸນແຮງສັງກັດຢູ່.

**ມາດຕາ 49 ການສຶກສາອົບຮົມ, ປະນີປະນອມ ໂດຍສະມາຊິກໃນຄອບຄົວ, ຍາດໃກ້ຊິດ ແລະ ຜູ້ອາວຸໂສໃນບ້ານ**

ສະມາຊິກໃນຄອບຄົວ ມີຄວາມຮັບຜິດຊອບໃນການສຶກສາອົບຮົມ, ປະນີປະນອມ ແລະ ຊອກຫາວິທີການແກ້ໄຂການໃຊ້ຄວາມຮຸນແຮງ ລະຫວ່າງສະມາຊິກໃນຄອບຄົວຢ່າງທັນການ ເພື່ອຮັກສາສະຖານະພາບ, ຄວາມໝັ້ນຄົງ ແລະ ຄວາມສາມັກຄີປອງດອງໃນຄອບຄົວ ແນໃສ່ ຕ້ານ ແລະ ສະກັດກັ້ນຄວາມຮຸນແຮງໃນອະນາຄົດ ແລະ ເຄົາລົບສິດຂອງສະມາຊິກຄອບຄົວ.

ໃນກໍລະນີ ສະມາຊິກໃນຄອບຄົວ ຫາກບໍ່ສາມາດແກ້ໄຂດ້ວຍກັນເອງໄດ້ ຖ້າມີການຮ້ອງຂໍຂອງສະມາຊິກໃນຄອບຄົວ ກໍໃຫ້ຍາດໃກ້ຊິດ ຫຼື ຜູ້ອາວຸໂສໃນບ້ານທີ່ໄດ້ຮັບການເຊື່ອຖື ເປັນຜູ້ສຶກສາອົບຮົມ, ປະນີປະນອມ ພ້ອມທັງແນະນໍາ, ຊ່ວຍເຫຼືອ ແລະ ຊຸກຍູ້ ໃຫ້ມີຄວາມເຂົ້າໃຈ, ຮັກແພງ, ປອງດອງ ແລະ ຢຸດເຊົາການໃຊ້ຄວາມຮຸນແຮງ.

ໃນກໍລະນີ ບໍ່ສາມາດແກ້ໄຂໄດ້ ຜູ້ຖືກເຄາະຮ້າຍ ສາມາດຮ້ອງຂໍໃຫ້ຄະນະໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ ຫຼື ໜ່ວຍງານໃຫ້ຄໍາປຶກສາ ແລະ ປົກປ້ອງແມ່ຍິງ ແລະ ເດັກ ເປັນຜູ້ໄກ່ເກ່ຍ.

## ມາດຕາ 50 ການສຶກສາອົບຮົມ, ປະນີປະນອມ ໂດຍການຈັດຕັ້ງ

ການຈັດຕັ້ງ ບ່ອນຜູ້ຖືກເຄາະຮ້າຍ ຫຼື ຜູ້ໃຊ້ຄວາມຮຸນແຮງສັງກັດຢູ່ ມີຄວາມຮັບຜິດຊອບໃນການສຶກສາອົບຮົມ, ປະນີປະນອມ ກ່ຽວກັບການໃຊ້ຄວາມຮຸນແຮງ ທີ່ມີຄວາມເສັຍຫາຍບໍ່ຫຼວງຫຼາຍທີ່ເກີດຂຶ້ນພາຍໃນການຈັດຕັ້ງຂອງຕົນ ເພື່ອຮັກສາຄວາມສາມັກຄີ, ປອງດອງ, ຮ່ວມມືກັນ ແລະ ຢຸດເຊົາການໃຊ້ຄວາມຮຸນແຮງ.

ໃນກໍລະນີ ການໃຊ້ຄວາມຮຸນແຮງ ຍັງສືບຕໍ່ນັ້ນ ກໍໃຫ້ສະເໜີຕໍ່ເຈົ້າໜ້າທີ່ຕໍາຫຼວດ ເພື່ອດໍາເນີນການແກ້ໄຂ.

ໃນການສຶກສາອົບຮົມ, ປະນີປະນອມ ແຕ່ລະຄັ້ງ ຕ້ອງເຮັດບົດບັນທຶກ ຕາມລະບຽບການ.

## ມາດຕາ 51 ການໃຊ້ຄວາມຮຸນແຮງທີ່ນໍາມາໄກ່ເກ່ຍ

ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ທີ່ນໍາມາໄກ່ເກ່ຍ ມີ ດັ່ງນີ້:

1. ການໃຊ້ຄວາມຮຸນແຮງທີ່ບໍ່ເປັນການກະທໍາຜິດທາງອາຍາ;
2. ການໃຊ້ຄວາມຮຸນແຮງ ທີ່ເປັນການກະທໍາຜິດໃນສະຖານລະຫຸໂທດ ຫຼື ໂທສານຸໂທດທີ່ກົດໝາຍກໍານົດ ໂທດຕັດອິດສະລະພາບ ແຕ່ໜຶ່ງປີ ລົງມາ.

## ມາດຕາ 52 ອົງການທີ່ມີສິດໃນການໄກເກ່ຍ

ການໄກ່ເກ່ຍກ່ຽວກັບການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ດໍາເນີນໂດຍອົງການ ດັ່ງນີ້:

1. ຄະນະໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ;
2. ໜ່ວຍງານໃຫ້ຄໍາປຶກສາ ແລະ ປົກປ້ອງແມ່ຍິງ ແລະ ເດັກ;
3. ເຈົ້າໜ້າທີ່ສືບສວນ-ສອບສວນຂອງຕໍາຫຼວດ;
4. ອົງການໄອຍະການປະຊາຊົນ;
5. ສານປະຊາຊົນ.

## ມາດຕາ 53 ຫຼັກການໄກ່ເກ່ຍ

ການໄກ່ເກ່ຍ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ມີການເຫັນດີຂອງຜູ້ຖືກເຄາະຮ້າຍ ພາຍຫຼັງໄດ້ຮັບການແຈ້ງສິດ ແລະ ທາງເລືອກໃນການແກ້ໄຂ;

2. ມີຂໍ້ມູນ, ຫຼັກຖານຮັດກຸມ, ໜັກແໜ້ນ ແລະ ຄົບຖ້ວນ;
3. ມີການຮັບສາລະພາບຂອງຜູ້ໃຊ້ຄວາມຮຸນແຮງ;
4. ຄຳນຶງເຖິງສິດ ແລະ ຄວາມປອດໄພຂອງຜູ້ຖືກເຄາະຮ້າຍເປັນຫຼັກ;
5. ຕົກລົງຮັບເອົາຜົນຂອງການໄກ່ເກ່ຍດ້ວຍຄວາມສະໝັກໃຈຂອງຜູ້ຖືກເຄາະຮ້າຍ;
6. ສະເໜີຍຸດຕິການໄກ່ເກ່ຍໄດ້ທຸກເວລາ ໂດຍຜູ້ຖືກເຄາະຮ້າຍ;
7. ຮັກສາຄວາມລັບຕໍ່ທຸກບັນຫາທີ່ນຳມາປຶກສາຫາລືໃນການໄກ່ເກ່ຍ.

**ມາດຕາ 54 ມາດຕະການຕໍ່ຜູ້ໃຊ້ຄວາມຮຸນແຮງ**

ໃນການໄກ່ເກ່ຍການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ອົງການທີ່ມີສິດໄກ່ເກ່ຍ ນຳໃຊ້ມາດຕະການຕໍ່ຜູ້ໃຊ້ຄວາມຮຸນແຮງ ດັ່ງນີ້:

1. ໃຫ້ໄປຂໍອະໄພໂທດນຳຜູ້ຖືກເຄາະຮ້າຍ, ຄອບຄົວຂອງຜູ້ຖືກເຄາະຮ້າຍ ແລະ ບຸກຄົນອື່ນ ທີ່ໄດ້ຮັບຜົນກະທົບ;
2. ຕັກເຕືອນ, ສຶກສາອົບຮົມໃຫ້ເຂົ້າໃຈ ຜົນຮ້າຍຂອງການກະທຳຂອງຕົນ ແລະ ໃຫ້ຢຸດເຊົາພຶດຕິກຳດັ່ງກ່າວ;
3. ບຳບັດພຶດຕິກຳທີ່ເປັນຕົ້ນເຫດການໃຊ້ຄວາມຮຸນແຮງ ເປັນຕົ້ນ ການຕິດເຫຼົ້າ, ຕິດຢາເສບຕິດ;
4. ເຮັດວຽກ, ອອກແຮງງານ ເພື່ອຮັບໃຊ້ຊຸມຊົນ ຫຼື ສັງຄົມ ເປັນເວລາໃດໜຶ່ງທີ່ແນ່ນອນ;
5. ນຳໃຊ້ມາດຕະການອື່ນທີ່ຈຳເປັນ.

**ມາດຕາ 55 ລະບຽບການ ແລະ ຂັ້ນຕອນການໄກ່ເກ່ຍ**

ການໄກ່ເກ່ຍ ນອກຈາກປະຕິບັດຕາມບົດບັນຍັດທີ່ໄດ້ກຳນົດໄວ້ໃນໝວດນີ້ແລ້ວ ໃຫ້ປະຕິບັດຕາມລະບຽບການ ແລະ ຂັ້ນຕອນການໄກ່ເກ່ຍ ທີ່ໄດ້ກຳນົດໄວ້ຕ່າງຫາກ.

**ມາດຕາ 56 ບົດບັນທຶກການໄກ່ເກ່ຍ**

ພາຍຫຼັງສິ້ນສຸດການໄກ່ເກ່ຍ ຕ້ອງໄດ້ເຮັດບົດບັນທຶກ ກ່ຽວກັບທຸກບັນຫາທີ່ໄດ້ຕົກລົງກັນ ແລະ ຕົກລົງກັນບໍ່ໄດ້ ລວມທັງ ການນຳໃຊ້ມາດຕະການຕໍ່ຜູ້ໃຊ້ຄວາມຮຸນແຮງ ແລ້ວອ່ານໃຫ້ຜູ້ເຂົ້າຮ່ວມຟັງ ຖ້າເຫັນດີຕາມບົດບັນທຶກແລ້ວ ກໍໃຫ້ທັງສອງຝ່າຍ ແລະ ຄະນະໄກ່ເກ່ຍ ລົງລາຍເຊັນ ຫຼື ແປະໂປ້ມືໃສ່.

## ໝວດທີ 2
## ການດຳເນີນຄະດີກ່ຽວກັບການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ

**ມາດຕາ 57 ການຮ້ອງຟ້ອງ ຫຼື ການແຈ້ງຄວາມ**

ການຮ້ອງຟ້ອງ ຫຼື ການແຈ້ງຄວາມກ່ຽວກັບການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ສາມາດດຳເນີນໄດ້ທາງປາກເປົ່າ ຫຼື ລາຍລັກອັກສອນ ຕໍ່ເຈົ້າໜ້າທີ່ສືບສວນ-ສອບສວນຂອງຕຳຫຼວດ.

ຜູ່ ມີສິດຮ້ອງຟ້ອງ ຫຼື ແຈ້ງຄວາມ ມີ ດັ່ງນີ້:

1. ຜູ່ຖືກເຄາະຮ້າຍ, ຜູ່ຕາງໜ້າ ຫຼື ການຈັດຕັ້ງຂອງຜູ່ກ່ຽວ;
2. ພໍ່ແມ່ ຫຼື ຜູ່ປົກຄອງຂອງເດັກທີ່ຖືກເຄາະຮ້າຍ;
3. ບຸກຄົນ, ນິຕິບຸກຄົນ ຫຼື ອົງການຈັດຕັ້ງທີ່ໄດ້ພົບເຫັນ ຫຼື ຮູ້ເຫດການກ່ຽວກັບການໃຊ້ຄວາມຮຸນແຮງ;
4. ແພດ, ພະນັກງານສັງຄົມສົງເຄາະ ຫຼື ນັກສັງຄົມສົງເຄາະ, ຄູ, ອາຈານ, ຜູ່ເບິ່ງແຍງດູແລເດັກ, ເຈົ້າໜ້າທີ່ຕຳຫຼວດ ແລະ ພະນັກງານອື່ນ ທີ່ປະຕິບັດໜ້າທີ່ ທີ່ໄດ້ພົບເຫັນ ຫຼື ຮູ້ເຫດການກ່ຽວກັບການໃຊ້ຄວາມຮຸນແຮງ.

**ມາດຕາ 58 ການພິຈາລະນາການຮ້ອງຟ້ອງ ຫຼື ການແຈ້ງຄວາມ**

ເຈົ້າໜ້າທີ່ສືບສວນ-ສອບສວນຂອງຕຳຫຼວດ ຕ້ອງພິຈາລະນາຄຳຮ້ອງຟ້ອງ ຫຼື ການແຈ້ງຄວາມພາຍໃນກຳນົດເວລາ ສາມວັນ ນັບແຕ່ວັນໄດ້ຮັບການຮ້ອງຟ້ອງ ຫຼື ແຈ້ງຄວາມວ່າຈະດຳເນີນການໄກ່ເກ່ຍ ຫຼື ດຳເນີນຄະດີຕໍ່ຜູ່ໃຊ້ຄວາມຮຸນແຮງ.

ການໄກ່ເກ່ຍ ຈະເຮັດຂຶ້ນໄດ້ກໍຕໍ່ເມື່ອມີການຕົກລົງເຫັນດີຂອງຜູ່ຖືກເຄາະຮ້າຍ ຫຼື ພໍ່ແມ່ ຫຼື ຜູ່ປົກຄອງຂອງເດັກທີ່ຖືກເຄາະຮ້າຍ ແລະ ໃຫ້ປະຕິບັດຕາມໝວດທີ 1 ຂອງພາກທີ VI ຂອງກົດໝາຍສະບັບນີ້ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ.

ໃນກໍລະນີ ບໍ່ມີເງື່ອນໄຂດຳເນີນການໄກ່ເກ່ຍ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 51 ຂອງກົດໝາຍສະບັບນີ້ ກໍໃຫ້ເປີດການສືບສວນ-ສອບສວນ ໂດຍປະຕິບັດຕາມກົດໝາຍວ່າດ້ວຍການດຳເນີນຄະດີອາຍາ.

**ມາດຕາ 59 ຫຼັກການໃນການດຳເນີນຄະດີກ່ຽວກັບການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ**

ການດຳເນີນຄະດີກ່ຽວກັບການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ບໍ່ວ່າໃນຂັ້ນຕອນການສືບສວນ-ສອບສວນ ແລະ ການໄຕ່ສວນຄະດີ ໃຫ້ປະຕິບັດຕາມຫຼັກການທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການດຳເນີນຄະດີອາຍາ.

ໃນກໍລະນີ ຜູ່ຖືກເຄາະຮ້າຍເປັນເດັກ ຫຼື ເດັກ ເປັນຜູ່ໃຊ້ຄວາມຮຸນແຮງ ໃຫ້ປະຕິບັດຕາມຫຼັກການທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການດຳເນີນຄະດີເດັກ.

**ມາດຕາ 60 ການຮ້ອງຟ້ອງເອົາຄ່າເສັຍຫາຍທາງແພ່ງ**

ການຮ້ອງຟ້ອງເອົາຄ່າເສັຍຫາຍທາງແພ່ງທີ່ຕິດພັນກັບການກະທຳຜິດທາງອາຍາ ໃຫ້ດຳເນີນໄປພ້ອມກັບການດຳເນີນຄະດີອາຍາ. ໃນກໍລະນີ ການໃຊ້ຄວາມຮຸນແຮງຕໍ່ຊັບສິນ ຫຼື ເສດຖະກິດ ຜູ້ຖືກເຄາະຮ້າຍ ມີສິດຮ້ອງຟ້ອງຕໍ່ສານປະຊາຊົນ ເພື່ອທວງເອົາຄ່າເສັຍຫາຍທາງແພ່ງ ຊຶ່ງການດຳເນີນຄະດີໃຫ້ປະຕິບັດຕາມກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ.

## ພາກທີ VII

## ການຄຸ້ມຄອງ ແລະ ການກວດກາ

### ໝວດທີ1

### ການຄຸ້ມຄອງວຽກງານຕ້ານ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງ

**ມາດຕາ 61 ອົງການຄຸ້ມຄອງ**

ລັດຖະບານ ເປັນຜູ້ຄຸ້ມຄອງວຽກງານຕ້ານ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກຢ່າງລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ສູນກາງສະຫະພັນແມ່ຍິງລາວ ແລະ ກຳມາທິການເພື່ອຄວາມກ້າວໜ້າຂອງແມ່ຍິງແຫ່ງຊາດ ເປັນຜູ້ຮັບຜິດຊອບໂດຍກົງ ແລະ ເປັນເຈົ້າການປະສານສົມທົບ ຕາມພາລະບົດບາດຂອງຕົນ ກັບກຳມາທິການເພື່ອແມ່ ແລະ ເດັກແຫ່ງຊາດ, ກະຊວງຕ່າງໆທີ່ກ່ຽວຂ້ອງ ເປັນຕົ້ນ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ກະຊວງສາທາລະນະສຸກ, ກະຊວງສຶກສາທິການ ແລະ ກິລາ, ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, ກະຊວງປ້ອງກັນຄວາມສະຫງົບ, ກະຊວງຍຸຕິທຳ, ຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດວຽກງານດັ່ງກ່າວ.

**ມາດຕາ 62 ສິດ ແລະ ໜ້າທີ່ຂອງສູນກາງສະຫະພັນແມ່ຍິງລາວ**

ໃນການຕ້ານ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ສູນກາງສະຫະພັນແມ່ຍິງລາວ ມີ ສິດ ແລະ ໜ້າທີ່ ຕາມພາລະບົດບາດຂອງຕົນ ດັ່ງນີ້:

1. ສ້າງ ແລະ ປັບປຸງນະໂຍບາຍ, ແຜນຍຸດທະສາດ ແລະ ກົດໝາຍ ກ່ຽວກັບການຕ້ານ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ, ຄວາມສະເໝີພາບຍິງ-ຊາຍ ແລະ ການລຶບລ້າງທຸກຮູບການຈຳແນກຕໍ່ແມ່ຍິງ ແລະ ເດັກ ເພື່ອສະເໜີລັດຖະບານພິຈາລະນາ;

2. ສ້າງ ແລະ ປະຕິບັດແຜນການ, ກິດຈະກຳ ເພື່ອຕ້ານ ແລະ ສະກັດກັ້ນ ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ;

3. ໂຄສະນາ, ເຜີຍແຜ່ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບສິດສະເໝີພາບຍິງ-ຊາຍ, ການຍົກສູງບົດບາດຂອງແມ່ຍິງ ແລະ ການປົກປ້ອງແມ່ຍິງ ຈາກການໃຊ້ຄວາມຮຸນແຮງ ລວມທັງສັນຍາສາກົນ ແລະ ສົນທິສັນຍາ ທີ່ ສປປ ລາວເປັນ ພາຄີ;

4. ຊີ້ນໍາ, ຊຸກຍູ້, ຄຸ້ມຄອງ ແລະ ຕິດຕາມ ການເຄື່ອນໄຫວຂອງພະນັກງານສັງຄົມສົງເຄາະ ຫຼື ນັກສັງຄົມສົງເຄາະ ທີ່ຂຶ້ນກັບຕົນ;

5. ເກັບກໍາ, ຄົ້ນຄວ້າ ແລະ ວິໄຈຂໍ້ມູນກ່ຽວກັບການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ;

6. ຈັດຕັ້ງການໃຫ້ຄໍາປຶກສາ ແລະ ປົກປ້ອງແມ່ຍິງ ແລະ ເດັກ ເພື່ອໃຫ້ແມ່ຍິງ ແລະ ເດັກ ໄດ້ ຮັບການຊ່ວຍເຫຼືອ, ຮູ້ເງື່ອນໄຂ ແລະ ວິທີການເຂົ້າເຖິງຂະບວນການຍຸຕິທໍາ;

7. ສ້າງກິດຈະກໍາ ເພື່ອສົ່ງເສີມສິດສະເໝີພາບຍິງ-ຊາຍ ແລະ ຍົກສູງບົດບາດຂອງແມ່ຍິງ ແລະ ເດັກໃນຄອບຄົວ ແລະ ສັງຄົມ;

8. ສ້າງກົນໄກ ແລະ ລະບົບປະສານງານໃນການຊ່ວຍເຫຼືອແມ່ຍິງ ແລະ ເດັກທີ່ຖືກເຄາະຮ້າຍ ລວມທັງເດັກທີ່ຕິດຕາມ ຢ່າງທັນການ;

9. ຊ່ວຍເຫຼືອຜູ້ຖືກເຄາະຮ້າຍດ້ານການໃຫ້ຄໍາປຶກສາ, ທີ່ພັກເຊົາຊົ່ວຄາວທີ່ປອດໄພ, ດ້ານກົດໝາຍ, ການສຶກສາ, ການຝຶກອົບຮົມວິຊາຊີບ ແລະ ການສົ່ງກັບຄືນສູ່ຄອບຄົວ ແລະ ສັງຄົມ ທັງເປັນຜູ້ປົກປ້ອງຜູ້ຖືກເຄາະຮ້າຍໃນການດໍາເນີນຄະດີໂດຍບໍ່ເສຍຄ່າ;

10. ປະສານສົມທົບ, ຊຸກຍູ້ ແລະ ຕິດຕາມກະຊວງ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງຈັດຕັ້ງປະຕິບັດວຽກງານຕ້ານ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ;

11. ພົວພັນ ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານຕ້ານ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ;

12. ສະຫຼຸບ ແລະ ລາຍງານການເຄື່ອນໄຫວວຽກງານຂອງຕົນຕໍ່ຂັ້ນເທິງ ຢ່າງເປັນປົກກະຕິ;

13. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 63 ສິດ ແລະ ໜ້າທີ່ຂອງຄະນະກໍາມາທິການ ເພື່ອຄວາມກ້າວໜ້າຂອງແມ່ຍິງແຫ່ງຊາດ ແລະ ຄະນະກໍາມາທິການເພື່ອແມ່ ແລະ ເດັກແຫ່ງຊາດ**

ໃນການຕ້ານ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ຄະນະກໍາມາທິການເພື່ອຄວາມກ້າວໜ້າຂອງແມ່ຍິງແຫ່ງຊາດ ແລະ ຄະນະກໍາມາທິການເພື່ອແມ່ ແລະ ເດັກແຫ່ງຊາດ ມີ ສິດ ແລະ ໜ້າທີ່ ຕາມພາລະບົດບາດຂອງຕົນ ດັ່ງນີ້:

1. ສະເໜີສ້າງ ແລະ ປັບປຸງນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ຄົ້ນຄວ້າອອກລະບຽບການທີ່ພົວພັນເຖິງການປົກປ້ອງສິດຂອງແມ່ຍິງ ແລະ ສົ່ງເສີມສິດສະເໝີພາບຍິງ-ຊາຍ ແລະ ການຕ້ານການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ;

2. ສ້າງ ແລະ ປະຕິບັດແຜນການດໍາເນີນງານແຫ່ງຊາດ ແລະ ກິດຈະກໍາ ເພື່ອຕ້ານ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ;

3. ໂຄສະນາ, ເຜີຍແຜ່ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການກ່ຽວກັບການຕ້ານ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ, ຄວາມສະເໝີພາບຍິງ-ຊາຍ ລວມທັງສັນຍາສາກົນ ແລະ ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ;

4. ເປັນໃຈກາງປະສານສົມທົບ, ຊຸກຍູ້ ແລະ ຕິດຕາມກະຊວງ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງໃນການຈັດຕັ້ງປະຕິບັດວຽກງານຕ້ານ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ;

5. ເກັບກໍາ, ຄົ້ນຄວ້າ ແລະ ວິໄຈຂໍ້ມູນກ່ຽວກັບການຕ້ານ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ;

6. ພົວພັນ, ຮ່ວມມືກັບຕ່າງປະເທດກ່ຽວກັບວຽກງານຕ້ານ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ;

7. ສະຫຼຸບ ແລະ ລາຍງານການເຄື່ອນໄຫວວຽກງານຂອງຕົນຕໍ່ຂັ້ນເທິງ ຢ່າງເປັນປົກກະຕິ.

8. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 64 ສິດ ແລະ ໜ້າທີ່ຂອງກະຊວງແຮງງານ ແລະ ສະຫວັດດີການສັງຄົມ**

ໃນການຕ້ານ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຈັດຕັ້ງຜັນຂະຫຍາຍແຜນນະໂຍບາຍ, ກົດໝາຍ, ລະບຽບການ ກ່ຽວກັບການປ້ອງກັນ, ການປົກປ້ອງ, ການຊ່ວຍເຫຼືອ ແລະ ການກັບຄືນສູ່ຄອບຄົວ ແລະ ສັງຄົມຂອງຜູ້ຖືກເຄາະຮ້າຍຈາກການໃຊ້ຄວາມຮຸນແຮງ;

2. ໂຄສະນາ, ເຜີຍແຜ່ ກົດໝາຍ, ລະບຽບການກ່ຽວກັບການຕ້ານ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ຕາມຄວາມຮັບຜິດຊອບຂອງຕົນ;

3. ສ້າງ ແລະ ຄຸ້ມຄອງຕາໜ່າງ ຫຼື ຄະນະກໍາມະການປົກປ້ອງ ແລະ ຊ່ວຍເຫຼືອເດັກ ເພື່ອໃຫ້ການປົກປ້ອງ ແລະ ຊ່ວຍເຫຼືອເດັກທີ່ຖືກເຄາະຮ້າຍ ຢ່າງທົ່ວເຖິງ;

4. ຊີ້ນໍາ, ຊຸກຍູ້, ຄຸ້ມຄອງ ແລະ ຕິດຕາມ ການເຄື່ອນໄຫວຂອງພະນັກງານສັງຄົມສົງເຄາະ ຫຼື ນັກສັງຄົມສົງເຄາະ ທີ່ຂຶ້ນກັບຕົນ;

5. ຊີ້ນໍາ ແລະ ຄຸ້ມຄອງວຽກງານຕ້ານ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງຢູ່ໂຮງຈັກ, ໂຮງງານ, ວິສາຫະກິດ ແລະ ສະຖານທີ່ເຮັດວຽກອື່ນ;

6. ສ້າງກົນໄກ ແລະ ລະບົບປະສານງານ ໃນການຊ່ວຍເຫຼືອເດັກທີ່ຖືກເຄາະຮ້າຍຢ່າງທັນການ;

7. ໃຫ້ການຊ່ວຍເຫຼືອດ້ານທີ່ພັກເຊົາທີ່ປອດໄພ, ຝຶກອົບຮົມວິຊາຊີບ, ສ້າງສີມືແຮງງານ ແລະ ການຊອກວຽກເຮັດງານທໍາໃຫ້ແກ່ເດັກຜູ້ຖືກເຄາະຮ້າຍ;

8. ຈັດຝຶກອົບຮົມ ແລະ ຍົກລະດັບຄວາມຮູ້ກ່ຽວກັບການຕ້ານ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງ ໃຫ້ແກ່ພະນັກງານ ແລະ ການຈັດຕັ້ງທີ່ກ່ຽວຂ້ອງຂອງຕົນ ເຊັ່ນ ໜ່ວຍງານສັງຄົມສົງເຄາະ;

9. ສະຫຼຸບ ແລະ ລາຍງານການເຄື່ອນໄຫວວຽກງານຂອງຕົນຕໍ່ຂັ້ນເທິງຢ່າງເປັນປົກກະຕິ;

10. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 65 ສິດ ແລະ ໜ້າທີ່ຂອງກະຊວງສາທາລະນະສຸກ**

ໃນການຕ້ານ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ກະຊວງສາທາລະນະສຸກ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ສະເໜີສ້າງ ຫຼື ປັບປຸງນະໂຍບາຍ, ກົດໝາຍ ແລະ ຄົ້ນຄວ້າອອກລະບຽບການກ່ຽວກັບການຊ່ວຍເຫຼືອດ້ານການແພດແກ່ຜູ້ຖືກເຄາະຮ້າຍ;

2. ໂຄສະນາ, ເຜີຍແຜ່ ນະໂຍບາຍ, ກົດໝາຍ ແລະ ລະບຽບການກ່ຽວກັບການຕ້ານ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ຕາມຄວາມຮັບຜິດຊອບຂອງຕົນ;

3. ຊີ້ນໍາ ແລະ ຄຸ້ມຄອງການໃຫ້ບໍລິການດ້ານການແພດ, ຟື້ນຟູດ້ານສຸຂະພາບຈິດ, ສຸຂະສຶກສາທີ່ຈໍາເປັນແກ່ຄອບຄົວ, ການຈັດຕັ້ງໂດຍສະເພາະຜູ້ຖືກເຄາະຮ້າຍຈາກການໃຊ້ຄວາມຮຸນແຮງທາງດ້ານ ຮ່າງກາຍ, ຈິດໃຈ ແລະ ທາງເພດ;

4. ສ້າງເງື່ອນໄຂໃຫ້ແມ່ຍິງ ແລະ ເດັກ ໄດ້ເຂົ້າເຖິງການບໍລິການດ້ານສາທາລະນະສຸກ;

5. ສ້າງ ແລະ ຄຸ້ມຄອງລະບົບການບໍລິການດ້ານການແພດ ເພື່ອໃຫ້ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍ ແລະ ເດັກທີ່ຕິດຕາມ ຢູ່ບ່ອນດຽວກັນ;

6. ຝຶກອົບຮົມ ແລະ ຍົກລະດັບຄວາມຮູ້ກ່ຽວກັບການຕ້ານ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ໃຫ້ແກ່ພະນັກງານຂອງຂະແໜງການຕົນ;

7. ສະຫຼຸບ ແລະ ລາຍງານການເຄື່ອນໄຫວວຽກງານຂອງຕົນຕໍ່ຂັ້ນເທິງຢ່າງເປັນປົກກະຕິ;

8. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 66 ສິດ ແລະ ໜ້າທີ່ຂອງກະຊວງສຶກສາທິການ ແລະ ກິລາ**

ໃນການຕ້ານ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ກະຊວງສຶກສາທິການ ແລະ ກິລາ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ສະເໜີສ້າງ ຫຼື ປັບປຸງນະໂຍບາຍ, ກົດໝາຍ ແລະ ຄົ້ນຄວ້າອອກລະບຽບການກ່ຽວກັບການສຶກສາທີ່ສົ່ງເສີມສິດສະເໝີພາບຍິງ-ຊາຍ ແລະ ການພັດທະນາເດັກທຸກປະເພດ;

2. ໂຄສະນາ, ເຜີຍແຜ່ ນະໂຍບາຍ, ກົດໝາຍ ແລະ ລະບຽບການ ກ່ຽວກັບການຕ້ານ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ຕາມຄວາມຮັບຜິດຊອບຂອງຕົນ;

3. ສ້າງເງື່ອນໄຂໃຫ້ແມ່ຍິງໄດ້ເຂົ້າເຖິງການສຶກສາໃນທຸກລະດັບ, ຄົ້ນຄວ້າເອົາເນື້ອໃນກ່ຽວກັບສິດສະເໝີພາບຍິງ-ຊາຍ, ການບໍ່ຈໍາແນກເພດ ແລະ ການຕ້ານການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ສັບຊ້ອນເຂົ້າໃນຫຼັກສູດການສຶກສາ;

4. ຊີ້ນໍາ ແລະ ຄຸ້ມຄອງວຽກງານຕ້ານ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງຢູ່ສະຖານທີ່ລ້ຽງເດັກ, ໂຮງຮຽນ ແລະ ສະຖານການສຶກສາອື່ນ;

5. ຈັດຝຶກອົບຮົມ ແລະ ຍົກລະດັບຄວາມຮູ້ແກ່ພະນັກງານ, ຄູ ແລະ ອາຈານ ກ່ຽວກັບວຽກງານຕ້ານ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ;

6. ສະຫຼຸບ ແລະ ລາຍງານການເຄື່ອນໄຫວວຽກງານຂອງຕົນຕໍ່ຂັ້ນເທິງຢ່າງເປັນປົກກະຕິ;

7. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 67 ສິດ ແລະ ໜ້າທີ່ຂອງກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ**

ໃນການຕ້ານ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ກະຊວງຖະແຫຼງຂ່າວ, ວັດທະນາທຳ ແລະ ທ່ອງທ່ຽວ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ໂຄສະນາ, ເຜີຍແຜ່ ນະໂຍບາຍ, ກົດໝາຍ, ລະບຽບການ ກ່ຽວກັບວຽກງານຕ້ານ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ແລະ ມູນເຊື້ອວັດທະນະທຳອັນດີງາມຂອງຊາດ;

2. ເຜີຍແຜ່ຜົນຮ້າຍ ແລະ ຄວາມສ່ຽງຂອງການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ;

3. ສະກັດກັ້ນການຜະລິດ ແລະ ເຜີຍແຜ່ສື່ລາມົກທີ່ຂັດກັບກົດໝາຍ, ລະບຽບການ ແລະ ຮີດຄອງປະເພນີອັນດີງາມຂອງລາວ, ຈຳກັດການໂຄສະນາ, ເຜີຍແຜ່ສິ່ງທີ່ຈະກໍ່ໃຫ້ເກີດມີການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ;

4. ຈັດຝຶກອົບຮົມ ແລະ ຍົກລະດັບຄວາມຮູ້ແກ່ພະນັກງານສື່ໃນທຸກລະດັບ ກ່ຽວກັບວຽກງານຕ້ານ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ;

5. ສະຫຼຸບ ແລະ ລາຍງານການເຄື່ອນໄຫວວຽກງານຂອງຕົນຕໍ່ຂັ້ນເທິງຢ່າງເປັນປົກກະຕິ;

6. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 68 ສິດ ແລະ ໜ້າທີ່ຂອງກະຊວງປ້ອງກັນຄວາມສະຫງົບ**

ໃນການຕ້ານ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ກະຊວງປ້ອງກັນຄວາມສະຫງົບ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຕິດຕາມ, ຊອກຫາ, ເກັບກຳຂໍ້ມູນ ແລະ ດຳເນີນຄະດີຕໍ່ຜູ້ໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ໃຫ້ມີຄວາມຊັດເຈນ, ຖືກຕ້ອງ ແລະ ວ່ອງໄວ;

2. ສຶກສາອົບຮົມ, ກ່າວເຕືອນ, ໄກ່ເກ່ຍຜູ້ໃຊ້ຄວາມຮຸນແຮງ ທີ່ກໍ່ຜົນເສັຍຫາຍບໍ່ຫຼວງຫຼາຍ;

3. ຊີ້ນຳ ແລະ ຄຸ້ມຄອງການນຳໃຊ້ວິທີການສືບສວນ-ສອບສວນ ຫຼື ມາດຕະການປົກປ້ອງຜູ້ຖືກເຄາະຮ້າຍ ເຊັ່ນ ການຈັບຕົວ, ກັກຕົວ, ກັກຂັງພາງ ຫຼື ການຫ້າມບໍ່ໃຫ້ຜູ້ໃຊ້ຄວາມຮຸນແຮງເຂົ້າໃກ້ຜູ້ຖືກເຄາະຮ້າຍ;

4. ຊ່ວຍເຫຼືອ ແລະ ກອບກູ້ເອົາຜູ້ຖືກເຄາະຮ້າຍ ພ້ອມທັງປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງ;

5. ສະຫຼຸບ ແລະ ລາຍງານການເຄື່ອນໄຫວວຽກງານຂອງຕົນຕໍ່ຂັ້ນເທິງຢ່າງເປັນປົກກະຕິ;

6. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 69 ສິດ ແລະ ໜ້າທີ່ຂອງກະຊວງຍຸຕິທຳ**

ໃນການຕ້ານ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ກະຊວງຍຸຕິທຳ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ສະເໜີສ້າງ ຫຼື ປັບປຸງກົດໝາຍ ກ່ຽວກັບການຕ້ານ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ໃຫ້ສອດຄ່ອງກັບສະພາບຕົວຈິງຂອງປະເທດ ແລະ ສອດຄ່ອງກັບສັນຍາສາກົນ ແລະ ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ;

2. ໂຄສະນາ, ເຜີຍແຜ່ ກົດໝາຍ, ລະບຽບການກ່ຽວກັບການຕ້ານ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;

3. ໃຫ້ການຊ່ວຍເຫຼືອດ້ານກົດໝາຍແກ່ແມ່ຍິງ ແລະ ເດັກ ທີ່ຖືກເຄາະຮ້າຍ;

4. ຈັດຝຶກອົບຮົມ ແລະ ຍົກລະດັບຄວາມຮູ້ດ້ານກົດໝາຍ ກ່ຽວກັບວຽກງານຕ້ານ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ໃຫ້ພະນັກງານ ແລະ ການຈັດຕັ້ງທີ່ຂຶ້ນກັບຕົນ ເຊັ່ນ ຫ້ອງການຍຸຕິທຳເມືອງ, ສະພາທະນາຍຄວາມ, ຄະນະໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ;

5. ສະຫຼຸບ ແລະ ລາຍງານການເຄື່ອນໄຫວວຽກງານຂອງຕົນຕໍ່ຂັ້ນເທິງຢ່າງເປັນປົກກະຕິ;

6. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 70 ສິດ ແລະ ໜ້າທີ່ຂອງ ຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ**

ແນວລາວສ້າງຊາດ, ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ, ສະຫະພັນກຳມະບານ, ຄະນະສະມາຊິກສະພາແຫ່ງຊາດເພດຍິງ, ຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ມີສິດ ແລະ ໜ້າທີ່ເຂົ້າຮ່ວມ, ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ແລະ ຮ່ວມມືໃນການຕ້ານ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງ, ການແກ້ໄຂ ແລະ ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກການໃຊ້ຄວາມຮຸນແຮງ ຕາມພາລະບົດບາດຂອງຕົນ.

ສຳລັບ ອົງການໄອຍະການປະຊາຊົນ ແລະ ສານປະຊາຊົນ ກໍໃຫ້ດຳເນີນຄະດີຕາມກົດໝາຍ.

## ໝວດທີ 2
## ການກວດກາວຽກງານຕ້ານ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງ

**ມາດຕາ 71 ອົງການກວດກາ**

ອົງການກວດກາ ປະກອບດ້ວຍ:

1. ອົງການກວດກາພາຍໃນ ຊຶ່ງແມ່ນອົງການດຽວກັນກັບອົງການຄຸ້ມຄອງວຽກງານຕ້ານ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 61 ຂອງກົດໝາຍສະບັບນີ້;

2. ອົງການກວດກາພາຍນອກ ຊຶ່ງແມ່ນສະພາແຫ່ງຊາດ, ອົງການກວດກາລັດຖະບານ ແລະ ຕ້ານການສໍ້ລາດບັງຫຼວງ, ອົງການກວດສອບແຫ່ງລັດ, ອົງການໄອຍະການປະຊາຊົນ, ແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນ.

**ມາດຕາ 72 ເນື້ອໃນການກວດກາ**

ການກວດກາວຽກງານຕ້ານ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ມີເນື້ອໃນ ດັ່ງນີ້:

1. ການປະຕິບັດກົດໝາຍ ແລະ ລະບຽບການກ່ຽວກັບການຕ້ານ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ;

2. ການປະຕິບັດສິດ ແລະ ໜ້າທີ່ຂອງອົງການຄຸ້ມຄອງ ລວມທັງ ການນໍາໃຊ້ມາດຕະການທາງດ້ານກົດໝາຍຕໍ່ຜູ້ໃຊ້ຄວາມຮຸນແຮງ;

3. ການປ້ອງກັນ, ການປົກປ້ອງ, ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍ, ການແກ້ໄຂ ແລະ ບັນຫາອື່ນທີ່ກ່ຽວຂ້ອງ.

**ມາດຕາ 73 ຮູບການການກວດກາ**

ການກວດກາ ມີ ສາມ ຮູບການ ດັ່ງນີ້:

1. ການກວດກາຕາມລະບົບປົກກະຕິ;
2. ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ;
3. ການກວດກາແບບກະທັນຫັນ.

ການກວດກາຕາມລະບົບປົກກະຕິ ແມ່ນ ການກວດກາຕາມແຜນການ ແລະ ມີກໍານົດເວລາອັນແນ່ນອນ ຊຶ່ງຕ້ອງປະຕິບັດ ຢ່າງໜ້ອຍ ໜຶ່ງຄັ້ງ ຕໍ່ປີ.

ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ແມ່ນ ການກວດການອກແຜນ ເມື່ອເຫັນວ່າ ມີຄວາມຈໍາເປັນ ຊຶ່ງຕ້ອງແຈ້ງໃຫ້ຜູ້ຖືກກວດກາຮູ້ກ່ອນລ່ວງໜ້າ ຢ່າງໜ້ອຍ ຊາວສີ່ຊົ່ວໂມງ.

ການກວດກາແບບກະທັນຫັນ ແມ່ນ ການກວດກາໃນເວລາທີ່ເຫັນວ່າມີຄວາມຈໍາເປັນ ແລະ ຮີບດ່ວນ ໂດຍບໍ່ມີການແຈ້ງໃຫ້ຜູ້ຖືກກວດກາຮູ້ກ່ອນລ່ວງໜ້າ.

## ພາກທີ VIII
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 74 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດກົດໝາຍສະບັບນີ້, ໃນການເຂົ້າຮ່ວມ ແລະ ໃຫ້ຄວາມຮ່ວມມືໃນການຕ້ານ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ລວມທັງ ການປົກປ້ອງ ແລະ ຊ່ວຍເຫຼືອຜູ້ຖືກເຄາະຮ້າຍ ຈະໄດ້ຮັບການຍ້ອງຍໍ ຫຼື ປະຕິບັດນະໂຍບາຍອື່ນ ຕາມລະບຽບການ.

**ມາດຕາ 75 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ໄດ້ລະເມີດກົດໝາຍສະບັບນີ້ ເປັນຕົ້ນ ຂໍ້ຫ້າມ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 45 ແລະ 46 ຂອງກົດໝາຍສະບັບນີ້ ຈະຖືກປະຕິບັດມາດຕະການສຶກສາອົບຮົມ, ລົງວິໄນ, ປັບໃໝ, ທາງແພ່ງ ຫຼື ລົງໂທດທາງອາຍາ ແລ້ວແຕ່ກໍລະນີເບົາ ຫຼື ໜັກ.

**ມາດຕາ 76 ມາດຕະການສຶກສາອົບຮົມ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ຫຼື ເດັກໃນຄອບຄົວ, ພະນັກງານ, ຜູ້ຮັບໃຊ້ວຽກງານຂອງຕົນ ຫຼື ບຸກຄົນອື່ນທີ່ເປັນແມ່ຍິງ ຫຼື ເດັກ ທີ່ກໍ່ຜົນເສຍຫາຍບໍ່ຫຼວງຫຼາຍ ແລະ ເປັນເທື່ອທໍາອິດ ຈະຖືກສຶກສາອົບຮົມ ແລະ ກ່າວເຕືອນ ພ້ອມທັງ ເຮັດບົດບັນທຶກ.

**ມາດຕາ 77 ມາດຕະການທາງວິໄນ**

ພະນັກງານ ຫຼື ເຈົ້າໜ້າທີ່ຂອງລັດ ທີ່ໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ຫຼື ເດັກ ຫຼື ລະເມີດຂໍ້ຫ້າມຕາມ ທີ່ໄດ້ກໍານົດໄວ້ໃນມາດຕາ 45 ຂອງກົດໝາຍສະບັບນີ້ ຊຶ່ງບໍ່ເປັນການກະທໍາຜິດທາງອາຍາ ຈະຖືກລົງວິໄນຕາມລະບຽບລັດຖະກອນ ຕາມແຕ່ລະກໍລະນີ ດັ່ງນີ້:

1. ຕິຕຽນ, ກ່າວເຕືອນຄວາມຜິດພ້ອມທັງບັນທຶກໄວ້ໃນສໍານວນຊີວະປະຫວັດຂອງຜູ້ກ່ຽວ;
2. ໂຈະການເລື່ອນຊັ້ນ, ຂັ້ນເງິນເດືອນ, ການຍ້ອງຍໍ;
3. ປົດຕໍາແໜ່ງ ຫຼື ຍົກຍ້າຍໄປຮັບໜ້າທີ່ອື່ນ ທີ່ມີຕໍາແໜ່ງຕໍ່າກວ່າເກົ່າ;
4. ໃຫ້ອອກຈາກລັດຖະການ ໂດຍບໍ່ໄດ້ຮັບນະໂຍບາຍໃດໆ.

**ມາດຕາ 78 ມາດຕະການທາງແພ່ງ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ຫຼື ເດັກ ຊຶ່ງກໍ່ຄວາມເສຍຫາຍຕໍ່ຮ່າງກາຍ, ສຸຂະພາບ, ຊີວິດ ຫຼື ຊັບສິນ ເປັນຕົ້ນ ການທໍາຮ້າຍຮ່າງກາຍ, ການກີດກັ້ນການປະຕິບັດສິດ ແລະ ພັນທະ, ການໃຫ້ອອກຈາກວຽກໂດຍບໍ່ຖືກຕ້ອງ, ການບັງຄັບທາງເພດ ຈະຕ້ອງໃຊ້ແທນຄ່າເສຍຫາຍຕາມທີ່ຕົນໄດ້ກໍ່ຂຶ້ນ ເຊັ່ນ ຄ່າປິ່ນປົວ, ຄ່າປົວແປງຈິດໃຈ ແລະ ຄ່າປ່ວຍການ.

**ມາດຕາ 79 ມາດຕະການທາງອາຍາ**

ບຸກຄົນ ທີ່ໄດ້ໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ຫຼື ເດັກ ທີ່ເປັນການກະທໍາຜິດທາງອາຍາ ຈະຖືກດໍາເນີນຄະດີ ແລະ ລົງໂທດຕາມທີ່ໄດ້ກໍານົດໄວ້ໃນກົດໝາຍອາຍາ. ນອກຈາກນັ້ນ ຜູ້ໃຊ້ຄວາມຮຸນແຮງລຸ່ມນີ້ ກໍຈະຖືກລົງໂທດ ດັ່ງນີ້:

1. ບຸກຄົນຜູ້ເປັນຜົວ ທີ່ໄດ້ບັງຄັບຮ່ວມເພດກັບເມັຍຕົນ ຈະຖືກລົງໂທດຕັດອິດສະລະພາບແຕ່ ສາມເດືອນ ຫາ ໜຶ່ງປີ ຫຼື ດັດສ້າງໂດຍບໍ່ຕັດອິດສະລະພາບ ແລະ ຈະຖືກປັບໃໝ ແຕ່ 300.000 ກີບ ຫາ 1.000.000 ກີບ.ໃນກໍລະນີການບັງຄັບຮ່ວມເພດ ທີ່ພາໃຫ້ມີການບາດເຈັບໜັກ ຈະຖືກລົງ

ໂທດຕັດອິດສະລະພາບ ແຕ່ ໜຶ່ງປີ ຫາ ຫ້າປີ ແລະ ຈະຖືກປັບໃໝ ແຕ່ 1.000.000 ກີບ ຫາ 3.000.000 ກີບ;

2. ບຸກຄົນ ທີ່ໄດ້ຮ່ວມເພດກັບເດັກຍິງ ຫຼື ເດັກຊາຍ ທີ່ມີອາຍຸຕໍ່າກວ່າ ສິບແປດປີ ລົງມາ ຫາ ສິບຫ້າປີ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ໜຶ່ງປີ ຫຼື ດັດສ້າງໂດຍບໍ່ຕັດອິດສະລະພາບ ແລະ ຈະຖືກປັບໃໝ ແຕ່ 1.000.000 ກີບ ຫາ 2.000.000 ກີບ. ໃນກໍລະນີ ຮ່ວມເພດກັບເດັກທີ່ມີອາຍຸຕໍ່າກວ່າ ສິບຫ້າປີ ລົງມາຫາ ສິບສອງປີ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ໜຶ່ງປີ ຫາ ຫ້າປີ ແລະ ຈະຖືກປັບໃໝ ແຕ່ 2.000.000 ກີບ ຫາ 5.000.000 ກີບ ແລະ ໃນກໍລະນີ ຮ່ວມເພດກັບເດັກທີ່ມີອາຍຸຕໍ່າກວ່າ ສິບສອງປີ ຈະຖືວ່າເປັນການຂົ່ມຂືນກຳຊຳເລົາເດັກ ແລະ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ເຈັດປີ ຫາ ສິບຫ້າປີ ແລະ ຈະຖືກປັບໃໝ ແຕ່ 7.000.000 ກີບ ຫາ 15.000.000 ກີບ.

3. ບຸກຄົນ ທີ່ໄດ້ບັງຄັບຜູ້ຍິງທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງຕົນ ແຕ່ງດອງ, ຢ່າຮ້າງ ຫຼື ກີດກັ້ນການແຕ່ງດອງ ຫຼື ການຢ່າຮ້າງ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ໜຶ່ງປີ ຫຼື ດັດສ້າງໂດຍບໍ່ຕັດອິດສະລະພາບ ແລະ ຈະຖືກປັບໃໝ ແຕ່ 300.000 ກີບ ຫາ 1.000.000 ກີບ. ໃນກໍລະນີ ບັງຄັບເດັກຕໍ່າກວ່າ ສິບແປດປີ ແຕ່ງດອງ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ໜຶ່ງປີ ຫາ ສາມປີ ແລະ ຈະຖືກປັບໃໝ ແຕ່ 1.000.000 ກີບ ຫາ 3.000.000 ກີບ.

4. ບຸກຄົນ ທີ່ໄດ້ຈຳແນກເດັກ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ໜຶ່ງປີ ຫາ ສາມປີ ແລະ ຈະຖືກປັບໃໝ ແຕ່ 1.000.000 ກີບ ຫາ 3.000.000 ກີບ.

**ມາດຕາ 80 ມາດຕະການທາງອາຍາຕໍ່ຜູ້ບໍ່ໃຫ້ການຊ່ວຍເຫຼືອແກ່ຜູ້ຖືກເຄາະຮ້າຍ**

ບຸກຄົນ ທີ່ບໍ່ໄດ້ໃຫ້ຄວາມຊ່ວຍເຫຼືອແກ່ແມ່ຍິງ ຫຼື ເດັກ ທີ່ເປັນຜູ້ຖືກເຄາະຮ້າຍຈາກການໃຊ້ຄວາມຮຸນແຮງ ທີ່ເປັນອັນຕະລາຍຮ້າຍແຮງ ທັງໆທີ່ຕົນມີຄວາມສາມາດຊ່ວຍເຫຼືອໄດ້ ກໍຈະມີຄວາມຮັບຜິດຊອບທາງອາຍາ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍອາຍາ.

## ພາກທີ IX
## ບົດບັນຍັດສຸດທ້າຍ

**ມາດຕາ 81 ການຈັດຕັ້ງປະຕິບັດ**

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ສູນກາງສະຫະພັນແມ່ຍິງລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 82  ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດ ນັບແຕ່ວັນປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໄດ້ອອກລັດຖະດຳລັດປະກາດໃຊ້ ແລະ ພາຍຫຼັງໄດ້ລົງຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ປະທານສະພາແຫ່ງຊາດ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ປະທານສະພາແຫ່ງຊາດ

ປານີ ຢາທໍ່ຕູ້